# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ມິຖຸນາ 2026
ປີທີ 15
ສະບັບທີ 1071


## ຜົນກອງປະຊຸມລັດຖະບານເປີດກວ້າງຄັ້ງທີ I ປະຈຳປີ 2026




(ສພຊ) - ຕອນແລງວັນທີ 25 ມິຖຸນານີ້ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ເຂັ້ງຄຳ ແກ້ວໝູຈັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປະຈຳປີ 2026 ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວ ໄດ້ເປີດຂຶ້ນໃນວັນທີ 24 ແລະ ປິດລົງໃນວັນທີ 25 ມິຖຸນາ 2026 ທີ່ຫໍປະຊຸມແຫ່ງຊາດ, ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ-ບັນດາແຂວງ ແລະ ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ ທຽບເທົ່າ

ອ່ານຕໍ່ໜ້າ 4



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການຫັນລົງຮາກຖານ ຍັງແມ່ນວິທີທີ່ດີ ແລະ ທັນການກວ່າໝູ່ ເພື່ອນຳເອົາແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ ເຂົ້າສູ່ການຈັດຕັ້ງປະຕິບັດໃນຕົວຈິງ.
(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 362)

ອ່ານຕໍ່ສະບັບໜ້າ

## ສານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ເນື່ອງໃນໂອກາດວັນສາກົນຕ້ານຢາເສບຕິດ



ເນື່ອງໃນໂອກາດວັນສາກົນຕ້ານຢາເສບຕິດ ຄົບຮອບ 39 ປີ (26/6/1987-26/6/2026)

- ພີ່ນ້ອງຮ່ວມຊາດ ທີ່ນັບຖື ແລະ ຮັກແພງ!

ເນື່ອງໃນໂອກາດວັນສາກົນຕ້ານຢາເສບຕິດ ຄົບຮອບ 39 ປີ (26 ມິຖຸນາ 1987-26 ມິຖຸນາ 2026) ໃນນາມຕາງໜ້າໃຫ້ພັກ ແລະ ລັດຖະບານ

ອ່ານຕໍ່ໜ້າ 5

## ຄະນະປະຈຳສະພາແຫ່ງຊາດ ປະຊຸມປະຈຳເດືອນມິຖຸນາ




(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມິຖຸນາ ໄດ້ຈັດຂຶ້ນໃນວັນທີ 26 ມິຖຸນາ 2026 ທີ່ຫ້ອງປະຊຸມວຽງໄຊ ຫໍສະພາແຫ່ງຊາດໂດຍການເປັນປະທານຂອງທ່ານ ນາງ ສຸນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ມີບັນດາຮອງປະທານ, ຄະນະປະຈຳສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2

## ໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ ສຳເລັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ IV



(ສພຊ) - ຕອນບ່າຍວັນທີ 24 ມິຖຸນານີ້ ທີ່ຫ້ອງປະຊຸມ 426 ສະພາແຫ່ງຊາດ, ໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ ໄດ້ຈັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ IV ຂອງຕົນຂຶ້ນຢ່າງເປັນທາງການ ໂດຍການເປັນປະທານຂອງສະຫາຍ ໂພໄຊ ໄຂຄຳພິທູນ ກຳມະການສູນກາງພັກ, ເລຂາໜ່ວຍພັກຮາກຖານ, ປະທານກຳມາທິການການຕ່າງປະເທດ; ເຂົ້າຮ່ວມ ແລະ ໃຫ້ການໂອ້ລົມຕໍ່ກອງປະຊຸມໂດຍສະຫາຍ ນາງ ສຸນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສະພາແຫ່ງຊາດ; ມີຜູ້ແທນສົມບູນ, ສະມາຊິກພັກ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 56 ສະຫາຍ, ຍິງ 20 ສະຫາຍ.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດແຫ່ງຄວາມສາມັກຄີ, ເປັນເອກະພາບ ແລະ ສະແດງອອກເຖິງຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ; ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນຕໍ່ບົດລາຍງານການເມືອງ ແລະ ທິດທາງແຜນການ, ຄາດໝາຍສູ້ຊົນ, ໜ້າທີ່ວຽກງານຈຸດສຸມ ໃນໄລຍະ 5 ປີຕໍ່ໜ້າ (2026-2030) ພ້ອມທັງຜ່ານບົດສຳຫຼວດການນຳພາຂອງຄະນະໜ່ວຍພັກສະໄໝທີ III ຜ່ານມາ ເຊິ່ງໄດ້ຕີລາຄາສູງຕໍ່ຜົນສຳເລັດດ້ານການນຳພາ-ຊີ້ນຳຮອບດ້ານໃນການເຄື່ອນໄຫວວຽກງານຂອງໜ່ວຍພັກ ເປັນ

ອ່ານຕໍ່ໜ້າ 8

## ສຳເລັດກອງປະຊຸມໃຫຍ່ສະມາຊິກພັກ ໜ່ວຍພັກຮາກຖານ ກປຊສ ຄັ້ງທີ V



ອ່ານຕໍ່ໜ້າ 3

## ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມ AIPACODD

(ສພຊ) - ວັນທີ 24 ມິຖຸນາ 2026, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ໂພສີ ເຕັມເມລາດ ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍທ່ານ ສາຍທອງ ພົມ

ອ່ານຕໍ່ໜ້າ 2



# ທາບທາມຄຳເຫັນໃສ່ຮ່າງກົດໝາຍແຮ່ທາດ



(ສພຊ) - ກົມທໍລະນີສາດ ແລະ ບໍ່ແຮ່, ກະຊວງອຸດສາຫະກຳ ແລະ ການຄ້າ (ອຄ) ໄດ້ຈັດກອງປະຊຸມເປີດກວ້າງທາບທາມຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍແຮ່ທາດ ສະບັບປັບປຸງ ໃນວັນທີ 22-23 ມິຖຸນານີ້ ທີ່ໂຮງແຮມ ຣໍລິເດ ອິນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງທ່ານ ຈັນສະແຫວງ ບຸນຍົງ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເຊິ່ງມີບັນດາປະທານ-ຮອງປະທານສະພາປະຊາຊົນ ແລະ ຫົວໜ້າພະແນກ ອຄ ແຂວງ-ນະຄອນຫຼວງ; ຫົວໜ້າຫ້ອງການ, ຫົວໜ້າ-ຮອງຫົວໜ້າກົມ ຈາກບັນດາກະຊວງທີ່ກ່ຽວຂ້ອງພ້ອມດ້ວຍປະທານ ແລະ ຜູ້ອຳນວຍການບໍລິສັດທີ່ດຳເນີນກິດຈະການດ້ານແຮ່ທາດ ແລະ ບໍ່ແຮ່ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອເປີດກວ້າງຮັບຟັງການປະກອບຄຳຄິດຄຳເຫັນ ແລະ ແລກປ່ຽນບົດຮຽນຈາກທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ເຂົ້າໃສ່ການປັບປຸງເນື້ອໃນກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 ເພື່ອໃຫ້ມີຄວາມສົມບູນ, ຄົບຖ້ວນ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນສູງສຸດ.

ທໍລະນີສາດ ແລະ ບໍ່ແຮ່ ຖືເປັນຂະແໜງການທີ່ມີບົດບາດສຳຄັນຍຸດທະສາດໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ຂຸດຄົ້ນແຫຼ່ງລາຍຮັບເຂົ້າງົບປະມານແຫ່ງລັດ ເພື່ອເປັນທຶນຮອນໃນການພັດທະນາປະເທດຊາດ. ໄລຍະຜ່ານມາ, ກົດໝາຍວ່າດ້ວຍແຮ່ທາດແມ່ນເຄື່ອງມື ແລະ ບ່ອນອີງອັນສຳຄັນໃນການຄຸ້ມຄອງ; ເຖິງຢ່າງໃດກໍຕາມ, ໃນທ່າມກາງການຂະຫຍາຍຕົວຂອງຂະແໜງການນີ້ ກໍຍັງມີປາກົດການຫຍໍ້ທໍ້ເກີດຂຶ້ນ ເຊິ່ງສ້າງຄວາມເສຍຫາຍຕໍ່ຊັບພະຍາກອນແຮ່ທາດ, ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນ. ເພື່ອຫຼຸດຜ່ອນຜົນກະທົບ ແລະ ແກ້ໄຂບັນຫາຫຍໍ້ທໍ້ດັ່ງກ່າວ, ລັດຖະບານ ຈຶ່ງໄດ້ຊີ້ນຳໃຫ້ມີການທົບທວນ ແລະ ປັບປຸງກົດໝາຍສະບັບນີ້ ໃຫ້ສອດຄ່ອງກັບສະພາບການພັດທະນາໃນປັດຈຸບັນ ແລະ ຍົກສູງບົດບາດການຄຸ້ມຄອງຂອງລັດໃຫ້ມີຄວາມເຂັ້ມງວດຂຶ້ນ.

ຜ່ານການເປັນເຈົ້າການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ປັດຈຸບັນການຄົ້ນຄວ້າປັບປຸງຮ່າງກົດໝາຍດັ່ງກ່າວ ແມ່ນສຳເລັດໃນຂັ້ນພື້ນຖານ; ກອງປະຊຸມທາບທາມຄຳເຫັນໃນຄັ້ງນີ້ ເປັນໂອກາດອັນດີໃຫ້ແກ່ຄະນະຮັບຜິດຊອບ ໄດ້ລາຍງານລາຍລະອຽດເນື້ອໃນ ພ້ອມທັງເປີດຮັບເອົາຄຳເຫັນອັນເປັນປະໂຫຍດຈາກຜູ້ເຂົ້າຮ່ວມ ເພື່ອເຮັດໃຫ້ກົດໝາຍສະບັບປັບປຸງນີ້ ມີຄວາມຮັດກຸມ ແລະ ເປັນບ່ອນອີງທີ່ໜັກແໜ້ນໃຫ້ແກ່ການພັດທະນາຂະແໜງບໍ່ແຮ່ແບບຍືນຍົງໃນອະນາຄົດ.

**(ເຜຈ: ຂ່າວສານອຸດສາຫະກຳ ແລະ ການຄ້າ - Ministry of Industry and Commerce)**



## ຄະນະປະຈຳ...

(ຕໍ່ຈາກໜ້າ 1)

ຮອງປະທານກຳມາທິການ, ບັນດາຮອງລັດຖະມົນຕີກະຊວງ, ອົງການ ແລະ ພະນັກງານວິຊາການຂອງກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຈຳນວນໜຶ່ງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນ ໄດ້ຮັບຟັງການລາຍງານການກະກຽມກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X, ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ແລະ ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ; ຟັງລາຍງານກ່ຽວກັບຄວາມພ້ອມການກະກຽມ ແລະ ຮຽບຮຽງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຄື:ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ແລະ ຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ); ພິຈາລະນາຕົກລົງການໃຫ້ສັດຕະຍາບັນແກ່ສົນທິສັນຍາຄື: ສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນລະຫວ່າງ ສປປລາວ ແລະ ສສ. ຫວຽດນາມ, ສົນທິສັນຍາວ່າດ້ວຍການຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານກົດໝາຍໃນບັນຫາອາຍາ ລະຫວ່າງ ສປປລາວ ແລະ ສ.ລັດເຊຍ, ສົນທິສັນຍາອາຊຽນວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ; ພ້ອມດຽວກັນນີ້, ກອງປະຊຸມຍັງໄດ້ພິຈາລະນາການສະເໜີຂອງລັດຖະບານກ່ຽວກັບໂຄງການພັດທະນາສາຍສົ່ງໄຟຟ້າແລະການສະເໜີກ່ຽວກັບການຫັນປ່ຽນທີ່ດິນຈຳນວນໜຶ່ງ ເພື່ອຮັບໃຊ້ການພັດທະນາຢູ່ບາງແຂວງ.

ຈາກນັ້ນ, ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນຕໍ່ເນື້ອໃນທີ່ນຳເຂົ້າພິຈາລະນາຢ່າງເລິກເຊິ່ງ ເພື່ອເປັນບ່ອນອີງໃຫ້ລັດຖະບານ ກໍຄືບັນດາກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງ ນຳໄປຄົ້ນຄວ້າປັບປຸງເຮັດໃຫ້ມີເນື້ອໃນຄົບຖ້ວນ,ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ໃນຕໍ່ໜ້າ.

# ກິດຈະກຳບານເຕະຫ້ອງວ່າການສະພາແຫ່ງຊາດ ແລະ ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ




(ສພຊ) - ວັນທີ 26 ມິຖຸນາ 2026, ຫ້ອງວ່າການສະພາແຫ່ງຊາດ ໄດ້ສ້າງຂະບວນການແຂ່ງຂັນກິລາບານເຕະມິດຕະພາບ ຊາຍ-ຍິງ ຮ່ວມກັບບໍລິສັດຜະລິດໄຟຟ້າລາວມະຫາຊົນ ທີ່ເດີ່ນກິລາເຟີຣາຣີ ໂດຍມີທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ, ບັນດາຫົວໜ້າກົມ, ພະນັກງານ-ລັດຖະກອນ ແລະ ນັກກິລາຂອງທັງສອງພາກສ່ວນເຂົ້າຮ່ວມຂະບວນການຢ່າງຟົດຟື້ນ.

ການແຂ່ງຂັນກິລາໃນຄັ້ງນີ້ ເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ III ຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ກໍຄືຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ; ພ້ອມດຽວກັນນີ້, ກໍເພື່ອເປັນການຮັດແໜ້ນຄວາມສາມັກຄີຮັກແພງ, ຄຸ້ນເຄີຍເຊິ່ງກັນແລະກັນ ລະຫວ່າງພະນັກງານຂອງຫ້ອງວ່າການສະພາແຫ່ງຊາດ ແລະ ບໍລິສັດຜະລິດໄຟຟ້າລາວມະຫາຊົນ ໃຫ້ນັບມື້ມີຄວາມແໜ້ນແຟ້ນຍິ່ງໆຂຶ້ນ ທັງເປັນການສົ່ງເສີມໃຫ້ພະນັກງານ-ລັດຖະກອນ ມີສຸຂະພາບທີ່ເຂັ້ມແຂງ.

ໂອກາດດັ່ງກ່າວ, ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ ຍັງໄດ້ມີພິທີມອບ-ຮັບຊຸດກິລາ (ຊາຍ-ຍິງ) ຈຳນວນ 70 ຊຸດ; ຫຼັງຈາກນັ້ນ, ກໍໄດ້ຮ່ວມພາເຂົ້າສາມັກຄີ ເພື່ອເພີ່ມທະວີຄວາມສະໜິດສະໜົມຮັກແພງເຊິ່ງກັນແລະກັນຕື່ມອີກ.

## ຄະນະ...

(ຕໍ່ຈາກໜ້າ 1)

ມະວົງ ສະມາຊິກສະພາແຫ່ງຊາດ ປະຈຳກຳມາທິການເສດຖະກິດ-ການເງິນ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມທາງໄກຂອງສະພາທີ່ປຶກສາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ຄັ້ງທີ 9 ພາຍໃຕ້ການເປັນປະທານຂອງທ່ານ ເຊມ ວິດຢາ (Chem Widhya) ເລຂາທິການໃຫຍ່ AIPA ແລະ ທ່ານ ເຟົາສຕິໂນ "ໂບຈີ" ຈີ. ດີ ທີ ສາມ (Faustino "Bojie" G. Dy III) ປະທານ AIPA ແລະ ປະທານສະພາຜູ້ແທນປະຊາຊົນແຫ່ງສາທາລະນະລັດຟີລິບປິນ ໂດຍມີຄະນະຜູ້ແທນ 9 ປະເທດຈາກບັນດາປະເທດສະມາຊິກ ຈຳນວນ 36 ທ່ານ, ແຂກຖືກເຊີນຈາກປະເທດເຈົ້າພາບ 4 ທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຕ່ລະປະເທດ ເຂົ້າຮ່ວມ; ກອງປະຊຸມຄັ້ງນີ້, ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນພາຍໃຕ້ຫົວຂໍ້ "ການເສີມສ້າງການຮ່ວມມືລັດຖະສະພາອາຊຽນ ເພື່ອຕອບໂຕ້ກັບການລວມຕົວຂອງການຄ້າຢາເສບຕິດ ແລະ ອາຊະຍາກຳທີ່ກ່ຽວຂ້ອງອື່ນໆ.

ທ່ານ ໂພສີເຕັມເມລາດ ໄດ້ສະແດງຄວາມຊົມເຊີຍຕໍ່ສະພາຜູ້ແທນປະຊາຊົນຟີລິບປິນ ໃນການເປັນປະທານ AIPA ແລະ ເປັນເຈົ້າພາບກອງປະຊຸມ AIPACODD. ທ່ານໄດ້ມີຄຳເຫັນພາຍໃຕ້ຫົວຂໍ້ດັ່ງກ່າວ ໂດຍເນັ້ນໃຫ້ເຫັນວ່າ ສປປລາວ ຢຶດໝັ້ນຕໍ່ພັນທະໃນສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍການຄວບຄຸມຢາເສບຕິດ ທັງ 3 ສະບັບ ແລະ ວິໄສທັດຂອງອາຊຽນ "ອາຊຽນທີ່ປອດໄພຈາກຢາເສບຕິດ"; ພ້ອມນັ້ນ, ຍັງໄດ້ກ່າວວ່າ ສະພາແຫ່ງຊາດ ສປປລາວ ພ້ອມທີ່ຈະເສີມຂະຫຍາຍການຮ່ວມມືລະຫວ່າງ AIPA ຜ່ານການແລກປ່ຽນແນວທາງປະຕິບັດທີ່ດີດ້ານນິຕິບັນຍັດ ແລະ ການສົ່ງເສີມການປະຕິບັດໜ້າທີ່ຮ່ວມກັນ ເພື່ອຕອບສະໜອງຕໍ່ການເຊື່ອມໂຍງທີ່ເພີ່ມຂຶ້ນລະຫວ່າງການຄ້າຢາເສບຕິດກັບອາຊະຍາກຳຂ້າມຊາດ ລວມເຖິງການຟອກເງິນ, ອາຊະຍາກຳທາງໄຊເບີ ແລະ ການໝູນວຽນເງິນທີ່ຜິດກົດໝາຍ.

ຕອນບ່າຍວັນດຽວກັນ, ທ່ານ ສາຍທອງ ພົມມະວົງ ໄດ້ນຳສະເໜີບົດລາຍງານຄວາມຄືບໜ້າຂອງສະພາບຢາເສບຕິດ ແລະ ອາຊະຍາກຳ ຢູ່ ສປປລາວ ໂດຍຊີ້ໃຫ້ເຫັນເຖິງຄວາມພະຍາຍາມໃນການສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການຄວບຄຸມຢາເສບຕິດ ແລະ ສານເຄມີທີ່ໃຊ້ເປັນວັດຖຸດິບຕັ້ງຕົ້ນ (2021-2025) ເຊິ່ງໄດ້ຂະຫຍາຍເວລາຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 110/ສພຊ; ທ່ານຍັງເນັ້ນໜັກວ່າ ສປປລາວ ຖືເອົາການຄວບຄຸມຢາເສບຕິດທີ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ, ການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ໂດຍສະເພາະໃນຂະແໜງການຍຸຕິທຳ ແລະ ການບັງຄັບໃຊ້ກົດໝາຍເຊິ່ງສະທ້ອນໃຫ້ເຫັນເຖິງວິທີການ "ໃນທົ່ວລັດຖະບານ" ແລະ "ທົ່ວສັງຄົມ".

ໃນຕອນທ້າຍ, ຄະນະຜູ້ແທນຍັງໄດ້ຮ່ວມກັນລົງນາມເພື່ອຮັບຮອງເອົາບົດລາຍງານກອງປະຊຸມ AIPACODD ເພື່ອສືບຕໍ່ເສີມສ້າງສັນຕິພາບ, ຄວາມສາມັກຄີໃນພາກພື້ນແລະການຮ່ວມມືກັນຢ່າງໃກ້ຊິດໃນການແກ້ໄຂບັນຫາຢາເສບຕິດ ແລະ ການຮັບຮອງເປັນເຈົ້າພາບຄັ້ງຕໍ່ໄປ ໂດຍແມ່ນປະເທດສິງກະໂປ ໃນປີ 2027.

# ເຊື່ອມຊຶມວຽກງານສະພາປະຊາຊົນແຂວງ



(ສພຂ) - ໃນວັນທີ 02 ມິຖຸນາຜ່ານມາ, ຢູ່ທີ່ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດກອງປະຊຸມເຊື່ອມຊຶມກ່ຽວກັບວຽກງານພາຍໃນ ສະພາປະຊາຊົນແຂວງຂຶ້ນ ໂດຍການເປັນປະທານ ຂອງທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ, ເລຂາຄະນະບໍລິການງານພັກແຂວງ ປະທານສະພາປະຊາຊົນແຂວງ ແລະ ໃຫ້ກຽດເຂົ້າຮ່ວມມີ ທ່ານ ສຳນານ ສິນທະນີ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ຜູ້ປະຈຳການ), ມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຫ້ອງວ່າການແຂວງ ຕະຫຼອດຮອດພະນັກງານວິຊາການທັງໝົດພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຜົນການເຄື່ອນໄຫວພົບປະ ລະຫວ່າງ ຄະນະນຳຂອງແຂວງຫຼວງພະບາງ ແລະ ຄະນະນຳຂອງແຂວງກວາງນິ່ງ ແລະ ນະຄອນຮ່າຍຟອງ ຂອງ ສສ.ຫວຽດນາມ ເຊິ່ງໃນໂອກາດດັ່ງກ່າວ ທ່ານໄດ້ພົບປະໂອ້ລົມກັບສອງສະຫາຍເລຂາ ກໍຄື ປະທານສະພາປະຊາຊົນຂອງສອງແຂວງ ເພື່ອປຶກສາຫາລືເພື່ອແລກປ່ຽນບົດຮຽນ ເປັນຕົ້ນແມ່ນ: ການໃຫ້ທຶນຊ່ວຍເຫຼືອດ້ານການສຶກສາ, ດ້ານການແພດ ແລະ ການສ້າງໂຄງລ່າງພື້ນຖານຂອງສະພາປະຊາຊົນແຂວງ ເພື່ອຮັດແໜ້ນສາຍພົວພັນ ຈົນກ້າວໄປເຖິງການຮ່ວມມືກັນໃນຕໍ່ໜ້າ ແລະ ຍາວນານ ໃຫ້ຄະນະນຳແລະບັນດາພະນັກງານ-ລັດຖະກອນ ພາຍໃນໄດ້ຮັບຮູ້.

ໂອກາດທີ່ທ່ານປະທານໄດ້ມາເຊື່ອມຊຶມ ແລະ ໂອ້ລົມ ທ່ານຍັງໄດ້ຖາມຂ່າວ ພາຍຫຼັງສຳເລັດ ກອງປະຊຸມຄົ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V, ເຊິ່ງສະພາປະຊາຊົນແຂວງ ໄດ້ປັບປຸງໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນໃໝ່, ການປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ສິດ ແລະ ໜ້າທີ່ ລວມໄປເຖິງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການເຄື່ອນໄຫວວຽກງານພ້ອມດຽວກັນນັ້ນ ທ່ານຍັງໄດ້ຊີ້ນຳໃຫ້ຮີບຮ້ອນເປີດກອງປະຊຸມໃຫຍ່ຂອງໜ່ວຍພັກ ເພື່ອຄັດເລືອກເອົາສະຫາຍເລຂາ ແລະ ສ້າງຄະນະພັກຮາກຖານສະພາປະຊາຊົນແຂວງ ທີ່ມີໜ່ວຍພັກຂຶ້ນກັບ ພ້ອມທັງຊີ້ນຳໃຫ້ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ກະກຽມແຜນດຳເນີນງານ, ແຜນງົບປະມານ ແລະ ແຜນຄົນ ເພື່ອຕອບສະໜອງໃຫ້ການເຄື່ອນວຽກງານ ຂອງສະພາປະຊາຊົນແຂວງ ຊຸດທີ V ໃນຕໍ່ໜ້າ ໃຫ້ມີປະສິດທິພາບ, ປະສິດທິຜົນທັງຍົກສູງບົດບາດຂອງສະພາປະຊາຊົນແຂວງໃຫ້ສູງຂຶ້ນ. ໃນຕອນທ້າຍ ທ່ານຍັງໄດ້ເນັ້ນໜັກໃຫ້ ພະນັກງານ-ລັດຖະກອນ ເອົາໃຈໃສ່ການປະຕິບັດໜ້າທີ່ຂອງຕົນ ໃນການເປັນເສນາທິການໃຫ້ຄະນະນຳດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ຮັບປະກັນໄດ້ປະສິດທິຜົນຂອງງານ ພ້ອມທັງເສີມຂະຫຍາຍມູນເຊື້ອສາມັກຄີຮັກແພງເປັນຈິດໜຶ່ງໃຈດຽວ ພ້ອມກັນເຮັດພ້ອມກັນສ້າງ ໃຫ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນພາຍໃນສຳນັກງານອົງການ;

ແລະ ວັນທີ 9 ມິຖຸນາທີ່ຜ່ານມານີ້, ທ່ານ ບຸນເລື່ອມ ມະນີວົງ ກຳມະການສູນກາງພັກ ເລຂາຄະນະບໍລິຫານງານພັກແຂວງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ປະທານ ສະພາປະຊາຊົນແຂວງຫຼວງພະບາງ, ພ້ອມດ້ວຍສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ຄະນະນຳຂອງແຂວງ, ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງໂພນໄຊ, ໂດຍມີການນຳເມືອງ, ພະນັກງານ-ລັດຖະກອນຂອງເມືອງ, ນາຍ ແລະ ພົນທະຫານ-ຕຳຫຼວດ ຕະຫຼອດຮອດປະຊາຊົນຜູ້ມີສິດເລືອກຕັ້ງ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ໃນໂອກາດດັ່ງກ່າວ, ທ່ານ ປອ. ຄຳກ້ຽງ ຈົ່ງຮົ່ວຖໍ່ ກຳມະການພັກແຂວງ ເລຂາຄະນະບໍລິຫານງານພັກເມືອງ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໂພນໄຊ ໄດ້ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດຫຼາຍດ້ານ ເປັນຕົ້ນແມ່ນ ລວມຍອດຜົນຜະລິດຕະພັນພາຍໃນບັນລຸຫຼາຍກວ່າ 502 ຕື້ກີບ, ສະເລ່ຍລາຍຮັບໄດ້ 13 ລ້ານ 8 ແສນກວ່າກີບຕໍ່ຄົນຕໍ່ປີ. ພ້ອມນັ້ນ, ທ່ານຍັງໄດ້ສະເໜີ ໃຫ້ການນຳແຂວງຊ່ວຍຊຸກຍູ້ໃຫ້ບໍລິສັດ ສຸມໃສ່ການກໍ່ສ້າງໄຟຟ້າແຕ່ຜາຕູບເໜືອໄປຫາບ້ານລັງກ່ອງ-ຜາແຕ້ມ ແລະ ແຕ່ບ້ານຫ້ວຍລຸ້ງສູງ ໄປຫາບ້ານຈອມຈຽງ ທີ່ກໍ່ສ້າງບໍ່ທັນສຳເລັດ, ລວມທັງບັນຫາເສັ້ນທາງເຂົ້າຫາເຂດການຜະລິດ, ການກໍ່ສ້າງຂົວຈົມຂ້າມນ້ຳງາ ແລະ ການສ້ອມແປງເສັ້ນທາງ ແຕ່ສາມແຍກປາກເຊືອງ ນະຄອນ ຫຼວງພະບາງ ຫາເທດສະບານເມືອງໂພນໄຊ. ພ້ອມດຽວກັນນີ້ ທ່ານ ບຸນເລື່ອມ ມະນີວົງ ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມຄົ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ພ້ອມທັງເປີດໂອກາດໃຫ້ຜູ້ເຂົ້າຮ່ວມ ມີຄຳຄິດເຫັນ, ຄຳສະເໜີ ຕໍ່ກັບບັນຫາປະກົດການຫຍໍ້ທໍ້, ທີ່ຕິດພັນກັບການດຳລົງຊີວິດຂອງປະຊາຊົນ ເພື່ອນຳສະເໜີ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາ, ແກ້ໄຂຕາມຄວາມເໝາະສົມ ແລະ ຖືກຕ້ອງຕາມລະບຽບການ, ທັງໄດ້ອະທິບາຍ-ຊີ້ແຈງບາງບັນຫາ ໃຫ້ພໍ່ແມ່ປະຊາຊົນຮັບຮູ້, ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ກົດໝາຍ, ລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງຕື່ມອີກ; ການລົງເຄື່ອນໄຫວຄັ້ງນີ້ທ່ານຍັງໄດ້ມອບ ເງິນສົດ ແລະ ຄອມພິວເຕີ ຈຳນວນ 2 ຊຸດ ລວມມູນຄ່າ 80,300,000 ກີບ, ໃຫ້ກັບເມືອງ ໂພນໄຊ ເພື່ອນຳໃຊ້ເຂົ້າໃນວຽກງານຫ້ອງການສະພາປະຊາຊົນແຂວງປະຈຳເມືອງ ແລະ ມອບເງິນຊຸກຍູ້ໃຫ້ ບ້ານທ່າໂພ, ບ້ານນ້ຳບໍ່, ບ້ານຫ້ວນມັນ ແລະ ບ້ານຫ້ວຍນົກ ລວມ 40 ລ້ານກີບ.

**(ວິລິຍະ ວັນນະສີ)**




## ສຳເລັດ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມໃຫຍ່ໜ່ວຍພັກຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ຄັ້ງທີ V ໄດ້ໄຂຂຶ້ນໃນຕອນບ່າຍວັນທີ 25 ມິຖຸນາ 2026 ທີ່ສະພາແຫ່ງຊາດໂດຍການເປັນປະທານຂອງສະຫາຍ ພົຈວ. ສຸລິໄຊ ພິຈິດ ກຳມະການສຳຮອງສູນກາງພັກ, ເລຂາໜ່ວຍພັກຮາກຖານ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເຂົ້າຮ່ວມ ແລະ ໃຫ້ກຽດໂອ້ລົມຕໍ່ກອງປະຊຸມໂດຍສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກ, ຮອງປະທານສະພາແຫ່ງຊາດ, ມີສະມາຊິກພັກທີ່ເປັນຜູ້ແທນກອງປະຊຸມໃຫຍ່ ແລະ ແຂກຖືກເຊີນເຂົ້າຮ່ວມທັງໝົດ 37 ສະຫາຍ, ຍິງ 9 ສະຫາຍ.

ກອງປະຊຸມໃຫຍ່ໄດ້ດຳເນີນໄປດ້ວຍບັນຍາກາດອັນຟົດຟື້ນ, ບົນພື້ນຖານຄວາມສາມັກຄີເປັນເອກະພາບ ແລະ ຄວາມຮັບຜິດຊອບສູງ ໃນການຄົ້ນຄວ້າ ແລະ ໄດ້ຮັບຮອງເອົາຢ່າງເປັນເອກະສັນ ຕໍ່ຮ່າງລາຍງານການເມືອງຂອງຄະນະໜ່ວຍພັກຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະໄໝທີ IV ທີ່ໄດ້ຕີລາຄາຄືນບັນດາຜົນສຳເລັດທີ່ບັນລຸໄດ້ໃນ 5 ປີຜ່ານມາ; ໄດ້ຮັບຮອງບົດສຳຫຼວດການນຳພາລວມຂອງຄະນະໜ່ວຍພັກຮາກຖານ ກປຊສ ສະໄໝທີ IV ໂດຍຕີລາຄາສູງຕໍ່ຄວາມພະຍາຍາມອັນຕັ້ງໜ້າ, ຄວາມເປັນເຈົ້າການປະດິດສ້າງ ແລະ ການສູ້ຊົນນຳພາຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ແລະ ຄັ້ງທີ XII ຂອງພັກ, ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງຄະນະບໍລິຫານພັກສະພາແຫ່ງຊາດ ກໍຄືມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງໜ່ວຍພັກຮາກຖານ ກປຊສ ໄດ້ຮັບຜົນສຳເລັດອັນສຳຄັນໃນຫຼາຍດ້ານ ແລະ ບາງດ້ານກໍລື່ນຄາດໝາຍ.

ໃນກອງປະຊຸມໃຫຍ່, ຜູ້ແທນຍັງໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍພັກຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຊຸດໃໝ່ (ສະໄໝທີ V) ຕາມມາດຕະຖານ-ເງື່ອນໄຂທີ່ກຳນົດໄວ້ເຊິ່ງມີຜູ້ສະໝັກຮັບເລືອກຕັ້ງ 7 ສະຫາຍ ແລະ ເລືອກໄດ້ຄະນະພັກຊຸດໃໝ່ຈຳນວນ 5 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກ ໄດ້ເປັນເອກະສັນເລືອກເອົາສະຫາຍ ພົຈວ. ສຸລິໄຊ ພິຈິດ ເປັນເລຂາໜ່ວຍພັກຮາກຖານ, ສະຫາຍ ພົຈວ. ຄຳແຝງ ວັນດີໄຊ ເປັນຮອງເລຂາໜ່ວຍພັກຮາກຖານແລະສະຫາຍ ພົຈວ. ແສງທອງ ທຳມະເທວາເປັນປະທານກວດກາຂອງໜ່ວຍພັກຮາກຖານ. ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ເລືອກຕັ້ງເອົາຜູ້ແທນສົມບູນ 13 ສະຫາຍ ແລະ ຜູ້ແທນສຳຮອງ 2 ສະຫາຍ ເພື່ອໄປເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ເຊິ່ງຈະເປີດຂຶ້ນໃນຕໍ່ໜ້າ.

ໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ໃຫ້ກຽດໂອ້ລົມຕໍ່ກອງປະຊຸມ, ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດຮອບດ້ານທີ່ໜ່ວຍພັກຍາດມາໄດ້ໃນໄລຍະ 5 ປີຜ່ານມາ ໂດຍສະແດງອອກໃນວຽກງານການເມືອງ-ແນວຄິດ, ການກໍ່ສ້າງພັກ, ການປັບປຸງກົງຈັກການຈັດຕັ້ງ, ການຊີ້ນຳນຳພາວຽກງານວິຊາສະເພາະ ແລະ ອົງການຈັດຕັ້ງມະຫາຊົນ. ສະຫາຍຮອງເລຂາຄະນະພັກ, ຮອງປະທານສະພາແຫ່ງຊາດ ຍັງໄດ້ມີຄຳເຫັນເນັ້ນຕື່ມບາງດ້ານເພື່ອປະຕິບັດໜ້າທີ່ທິດທາງໃນຕໍ່ໜ້າຂອງໜ່ວຍພັກ ຄື: ເພີ່ມທະວີວຽກງານສຶກສາອົບຮົມແນວຄິດການເມືອງ ດ້ວຍຫຼາຍຮູບການ, ຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເຊື່ອມຊຶມກຳແໜ້ນບັນດາແນວທາງແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ, ຂໍ້ກຳນົດ, ກົດລະບຽບຂອງກຳລັງປະກອບອາວຸດປະຊາຊົນ ເພື່ອເຮັດໃຫ້ພະນັກງານ-ສະມາຊິກພັກພາຍໃນກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສືບຕໍ່ຢຶດໝັ້ນຕໍ່ອຸດົມການສັງຄົມນິຍົມ, ມີຫຼັກໝັ້ນຊົນຊັ້ນໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ການປະຕິວັດ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນຢ່າງບໍ່ມີເງື່ອນໄຂ; ສືບຕໍ່ເພີ່ມທະວີການນຳພາ-ຊີ້ນຳປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດໃນເງື່ອນໄຂສະພາບການໃໝ່ໃຫ້ເລິກເຊິ່ງເຖິງຖອງ, ກວ້າງຂວາງ ແລະ ເຂັ້ມງວດຂຶ້ນກວ່າເກົ່າ; ປະສານສົມທົບແໜ້ນກັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເພື່ອຊຸກຍູ້ການປະຕິບັດຍຸດທະສາດຫັນກຳລັງລົງກໍ່ສ້າງຮາກຖານໃຫ້ແຂງແຮງກວ່າເກົ່າ; ສືບຕໍ່ປັບປຸງກໍ່ສ້າງພະນັກງານສືບທອດປ່ຽນແທນຖືເປັນບັນຫາປັດໄຈຕັດສິນ, ອັນສຳຄັນ ສຸມໃສ່ປັບປຸງດ້ານແບບແຜນວິທີເຮັດວຽກ; ເພີ່ມທະວີການປະສານງານພາຍໃນສະພາແຫ່ງຊາດ; ສູ້ຊົນໃຫ້ພະນັກງານສະມາຊິກພັກພາຍໃນກຳມາທິການ ສືບຕໍ່ມີຄວາມອຸ່ນອຽນທຸ່ນທ່ຽງ, ຮັກສາໄດ້ຄວາມສະຫງົບປອດໄພໃນຖັນແຖວພະນັກງານ; ເຊີດຊູບົດບາດການນຳພາຂອງພັກໃຫ້ສູງຂຶ້ນ ປະກອບສ່ວນເຂົ້າໃນຜົນສຳເລັດລວມຂອງສະພາແຫ່ງຊາດ, ໂດຍສະເພາະແມ່ນການກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ໃນຕໍ່ໜ້າ.

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ຂັ້ນສູນກາງ ເຂົ້າຮ່ວມ; ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາ ຕໍ່ບັນດາຫົວຂໍ້ໃນ 2 ວາລະສຳຄັນຄື:

ວາລະທີ 1: ສະຫຼຸບວຽກພົ້ນເດັ່ນ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມໄລຍະ 6 ເດືອນທ້າຍປີ 2026 ຂອງລັດຖະບານ; ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມໄລຍະ 6 ເດືອນທ້າຍປີ 2026. ໃນນັ້ນ, ຕໍ່ການສະຫຼຸບວຽກພົ້ນເດັ່ນ 6 ເດືອນຕົ້ນປີ: ລັດຖະບານໄດ້ສຸມໃສ່ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2026 ແລະ ມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 177/ສພຊ, ລົງວັນທີ 21 ພະຈິກ 2025 ວ່າດ້ວຍການຮັບຮອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2026 ມີຜົນສຳເລັດຫຼາຍດ້ານ ເຊັ່ນ: ທົ່ວປະເທດ ສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ໄດ້ເອົາໃຈໃສ່ເກັບກູ້ອາວຸດ, ວັດຖຸລະເບີດ, ແກ້ໄຂບັນຫາຢາເສບຕິດ, ແກ໊ງສະແກມເມີ, ການລັກລອບຂຸດຄົ້ນແຮ່ທາດ, ການນຳເຂົ້າ ແລະ ນຳໃຊ້ພາຫະນະບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ເຊິ່ງສາມາດມ້າງຄະດີຢາເສບຕິດໄດ້ 1,786 ເລື່ອງ, ຈັບຜູ້ຖືກຫາໄດ້ 4,025 ຄົນ, ຈັບກຸ່ມແກ໊ງສະແກມເມີໄດ້ 20 ຄັ້ງ, ກັກຜູ້ຖືກຫາໄດ້ 2,652 ຄົນ ລວມມີຄົນລາວ ແລະ ຄົນຕ່າງປະເທດ, ຢຶດຂອງກາງໄດ້ຫຼາຍສົມຄວນ; ຈັບຜູ້ລັກລອບຂຸດຄົ້ນແຮ່ທາດຢູ່ 12 ແຂວງ ແລະ ນະຄອນຫຼວງວຽງຈັນ ພົບຜູ້ກະທຳຜິດ 153 ຄົນ ເຊິ່ງມີທັງຄົນລາວ ແລະ ຄົນຕ່າງປະເທດ, ຢຶດລົດຈັກໄດ້ 72 ຄັນ, ລົດດ້າມ 3 ຄັນ, ລົດຕັກ 1 ຄັນ, ເຮືອ 10 ລຳ, ລົດກະບະ 5 ຄັນ ແລະ ອຸປະກອນອື່ນໆ. ເສດຖະກິດຂະຫຍາຍຕົວໃນລະດັບ 5%; ສາມາດເກັບລາຍຮັບງົບປະມານໄດ້ 52% ຂອງແຜນການປີ, ປະຕິບັດແຜນລາຍຈ່າຍງົບປະມານໄດ້ 34% ຂອງແຜນການປີ, ສະສົມຄັງ ສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າບໍ່ຫຼຸດ 5 ເດືອນ, ຄວບຄຸມອັດຕາເງິນເຟີ້ສະເລ່ຍຢູ່ໃນລະດັບ 8%. ພ້ອມກັນນັ້ນ, ການກໍ່ສ້າງ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ-ຂົວ, ການຜະລິດສິນຄ້າຮັບໃຊ້ພາຍໃນແລະສົ່ງອອກ; ການພັດທະນາວຽກງານການສຶກສາ, ສາທາລະນະສຸກ, ພະລັງງານໄຟຟ້າ, ການຄຸ້ມຄອງ-ດຶງດູດການລົງທຶນ, ການອອກໃບຕາດິນ, ການຄຸ້ມຄອງ-ພັດທະນາສີມືແຮງງານ, ການພັດທະນາພື້ນຖານໂຄງລ່າງການທ່ອງທ່ຽວ, ການສ້າງ ແລະ ປັບປຸງກົດໝາຍ, ການແກ້ໄຂບັນຫາຂາດເຂີນນ້ຳມັນເຊື້ອໄຟ, ການເຄື່ອນໄຫວວຽກງານຕ່າງປະເທດ, ການປັບປຸງການຈັດຕັ້ງແຕ່ລະຂັ້ນ, ການປະກາດສ້າງຕັ້ງຕາແສງ ແລະ ອື່ນໆ ລ້ວນແຕ່ມີຄວາມຄືບໜ້າດີ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີວຽກງານຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ: ບັນຫາປາກົດການຫຍໍ້ທໍ້ໃນສັງຄົມ, ການຫັນເປັນທັນສະໄໝຍັງຊັກຊ້າ, ການຄຸ້ມຄອງໂຄງການຂຸດຄົ້ນແຮ່ທາດ, ການນຳເຂົ້າສິນຄ້າຟຸມເຟືອຍ, ການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ, ການລັກລອບຕັດໄມ້, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້, ການປົກປັກຮັກສາສິ່ງແວດລ້ອມ, ການນຳໃຊ້ຊັບສິນຂອງລັດຍັງຟຸມເຟືອຍ, ການເຄົາລົບປະຕິບັດກົດໝາຍ-ລະບຽບການ ແລະ ອື່ນໆ.

ສຳລັບແຜນວຽກຈຸດສຸມ 6 ເດືອນທ້າຍປີ 2026: ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຈະຕ້ອງໄດ້ສືບຕໍ່ສຸມໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ; ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ມະຕິວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່, ມະຕິສະພາແຫ່ງຊາດ ສະບັບເລກທີ 177/ສພຊ ວ່າດ້ວຍການຮັບຮອງທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2026, ດຳລັດ 08/ລບ ວ່າດ້ວຍການກຳນົດໜ້າວຽກ ແລະ ແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2026. ພ້ອມ



ດຽວກັນນັ້ນ, ກໍຕ້ອງໄດ້ພ້ອມກັນແກ້ໄຂບັນຫາເຄັ່ງ ຮ້ອນຕາມການຊີ້ນຳຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ໃນກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານ ຊຸດທີ X (ທິດຊີ້ນຳ 9 ຂໍ້) ແລະ ໃນກອງປະຊຸມຄົບຄະນະຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ໂດຍສະເພາະໃຫ້ເອົາໃຈໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ການຮັກສາສະຖຽນລະພາບທາງດ້ານເງິນຕາ-ອັດຕາແລກປ່ຽນ; ຮັບປະກັນບໍ່ໃຫ້ຂາດແຄນນ້ຳມັນເຊື້ອໄຟ; ຄຸ້ມຄອງລາຄາສິນຄ້າ, ຄ່າຄອງຊີບ, ອັດຕາເງິນເຟີ້ ບໍ່ໃຫ້ເພີ່ມສູງຂຶ້ນ; ສຸມໃສ່ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ແລະ ອື່ນໆ ຕາມ 12 ໜ້າວຽກໃຫຍ່ ຄື:

1. ສືບຕໍ່ສຸມໃສ່ການຮັບປະກັນສະຖຽນລະພາບທາງດ້ານການເມືອງໃຫ້ໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ໂດຍເອົາໃຈໃສ່ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ, ເຂດລໍ່ແຫຼມຕາມຊາຍແດນໃຫ້ເຂັ້ມແຂງ; ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ເອົາໃຈໃສ່ໃນການກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານ ແລະ ແກ້ໄຂຢາເສບຕິດ ໃນຂອບເຂດທົ່ວປະເທດ ໃຫ້ເປັນລະບົບ; ສຸມໃສ່ແກ້ໄຂອາຊະຍາກຳທາງຄອມພິວເຕີ ໂດຍສະເພາະແມ່ນກຸ່ມແກ໊ງສະແກມເມີທີ່ພວມລະບາດຢ່າງກວ້າງຂວາງທີ່ສ້າງຄວາມເດືອດຮ້ອນໃຫ້ແກ່ປະຊາຊົນ; ຄຽງຄູ່ກັບການແກ້ໄຂບັນຫາອຸບັດເຫດຕາມທ້ອງຖະໜົນແລະບັນຫາຫຍໍ້ທໍ້ອື່ນໆໃຫ້ມີຄວາມຄືບໜ້າ ແລະ ຫຼຸດລົງ. ໃຫ້ທຸກພາກສ່ວນກະກຽມຄວາມພ້ອມຮອບດ້ານຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ ເພື່ອຮັບປະກັນຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນຂອງປະຊາຊົນ; ຕ້ອງມີການວາງແຜນແຕ່ຫົວທີ, ມີລະບົບເຕືອນໄພທຳມະຊາດຢ່າງທັນການ; ເອົາໃຈໃສ່ບໍລິຫານ-ຈັດການນ້ຳຂອງບັນດາເຂື່ອນໄຟຟ້າ ໃຫ້ດີ ແລະ ກະກຽມຄວາມພ້ອມໃນການເຄື່ອນຍ້າຍປະຊາຊົນ, ການຊ່ວຍເຫຼືອ, ບັນເທົາທຸກໃຫ້ແກ່ປະຊາຊົນ ຫາກໄພພິບັດເກີດຂຶ້ນ.

2. ເອົາໃຈໃສ່ສູ້ຊົນເກັບລາຍຮັບງົບປະມານ ໂດຍສຸມໃສ່ການສ້າງນະໂຍບາຍຊຸກຍູ້ສົ່ງເສີມໃຫ້ມີຫົວໜ່ວຍລາຍຮັບໃໝ່ເພີ່ມຂຶ້ນ, ຍູ້ແຮງການຫັນເປັນທັນສະໄໝໃນການເກັບລາຍຮັບ, ຄົ້ນຄວ້າປັບປຸງລະບຽບການ, ມາດຕະການ ກ່ຽວກັບການກຳນົດຄ່າທຳນຽມ ແລະ ຄ່າບໍລິການ ຄຽງຄູ່ກັບການຄຸ້ມຄອງລາຍຈ່າຍງົບປະມານໃຫ້ໄປຕາມແຜນການ ແລະ ມີປະສິດທິຜົນ; ໃຫ້ສົ່ງເສີມການປະຢັດ ແລະ ຕ້ານການຟຸມເຟືອຍທົ່ວສັງຄົມ ໂດຍຄົ້ນຄວ້າວາງມາດຕະການໃໝ່ໃຫ້ສອດຄ່ອງ ແລະ ສາມາດປະຕິບັດໄດ້ ບໍ່ໃຫ້ວາງອອກແບບລວມໆ, ຄວນມີການວາງມາດຕະການໃຫ້ມີລັກສະນະເຈາະຈົງວ່າ ອັນໃດແມ່ນການປະຢັດ, ອັນໃດແມ່ນການຟຸມເຟືອຍ, ການຟຸມເຟືອຍແບບໃດ ຈະມີການລົງວິໄນ; ລັດຖະບານກໍຕ້ອງເປັນແບບຢ່າງນຳໜ້າໃນການປະຢັດເຊັ່ນ: ເລີ່ມຈາກການປະຢັດການນຳໃຊ້ໄຟຟ້າ, ນ້ຳປະປາ; ຫຼຸດຜ່ອນການໃຊ້ຈ່າຍບໍລິຫານທີ່ບໍ່ສົມເຫດສົມຜົນ, ລວມທັງການໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດທີ່ບໍ່ຈຳເປັນ; ປູກຈິດສຳນຶກຊາດນິຍົມ, ສົ່ງເສີມການຊົມໃຊ້ຜະລິດຕະພັນພາຍໃນປະເທດ; ສືບຕໍ່ປັບປຸງບັນດາລັດວິສາຫະກິດໃຫ້ເຂັ້ມແຂງ ແລະ ດຳເນີນທຸລະກິດໃຫ້ມີປະສິດທິພາບ; ສຸມໃສ່ປະຕິບັດມາດຕະການຕ່າງໆເພື່ອສືບຕໍ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ສູ້ຊົນສະສົມຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າໃຫ້ໄດ້ຕາມແຜນການ.

3. ສືບຕໍ່ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນເພື່ອທົດແທນການນຳເຂົ້າບັນດາພື້ນຖານການຜະລິດທີ່ມີທ່າແຮງ ເປັນຕົ້ນ: ສະບຽງອາຫານ, ແນວພັນພືດ, ຫົວອາຫານສັດ, ຝຸ່ນຊີວະພາບ ແລະ ປຸ໋ຍ; ຊຸກຍູ້, ສົ່ງເສີມການຜະລິດ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ ແລະ ອຸດສາຫະກຳ ເພື່ອເປັນສິນຄ້າສົ່ງອອກທີ່ມີມູນຄ່າເພີ່ມສູງຂຶ້ນ ທັງຮັບປະກັນດ້ານປະລິມານ, ຄຸນນະພາບ ແລະ ສາມາດແຂ່ງຂັນໄດ້; ເອົາໃຈໃສ່ຄຸ້ມຄອງລາຄາສິນຄ້າທີ່ຮັບໃຊ້ຊີວິດປະຈຳວັນໃຫ້ມີຄວາມສອດຄ່ອງກັບສະພາບເສດຖະກິດຕົວຈິງ; ສົ່ງເສີມ ແລະ ພັດທະນາຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ເຂັ້ມແຂງ ດ້ວຍການສືບຕໍ່ປະຕິບັດນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ, ກະຈາຍແຫຼ່ງທຶນ ແລະ ບັນດາກອງທຶນຕ່າງໆ ໃຫ້ມີປະສິດທິຜົນ; ສືບຕໍ່ດັດສົມບໍລິສັດນຳເຂົ້ານ້ຳມັນເຊື້ອໄຟ ແລະ ດັດສົມບໍລິສັດນຳເຂົ້າລົດ ທີ່ມີຈຳນວນຫຼາຍ ໃຫ້ຫຼຸດລົງເພື່ອຄຸ້ມຄອງງ່າຍ; ສົ່ງເສີມການນຳໃຊ້ລົດໄຟຟ້າ, ການນຳໃຊ້ພະລັງງານສະອາດ ໂດຍສະເພາະການສົ່ງເສີມຄົວເຮືອນຕິດຕັ້ງພະລັງງານແສງຕາເວັນເທິງຫຼັງຄາເຮືອນໃຫ້ແຂງແຮງ ແລະ ເປັນຮູບປະທຳກວ່າເກົ່າ; ພ້ອມທັງຮີບຮ້ອນຄົ້ນຄວ້າຮູບແບບການລົງທຶນໂຄງການພື້ນຖານໂຄງລ່າງທໍ່ສົ່ງນ້ຳມັນຫວຽດນາມ-ລາວ ໃຫ້ສຳເລັດຕາມແຜນການທີ່ວາງໄວ້; ພ້ອມດຽວກັນນີ້, ກໍໃຫ້ສືບຕໍ່ແກ້ໄຂການລັກລອບຂຸດຄົ້ນແຮ່ທາດ, ລັກລອບຂຸດຄົ້ນຄຳຕົກຂ້ອນ ແລະ ການຂຸດຄົ້ນໄມ້ ທີ່ບໍ່ຖືກຕ້ອງຢ່າງເດັດຂາດ, ເຂັ້ມງວດ.

4. ຊຸກຍູ້ແຮງການຜະລິດສະບຽງອາຫານ ແລະ ການຜະລິດສິນຄ້າກະສິກຳທີ່ມີທ່າແຮງ, ສືບຕໍ່ຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດຕາມແຜນການ, ພ້ອມທັງອອກແຈ້ງການກ່ຽວກັບການຂຶ້ນທະບຽນອອກໃບຕາດິນ, ການຫັນປ່ຽນກຳມະສິດທີ່ດິນຕ້ອງຊຳລະຄ່າທຳນຽມ, ຄ່າຊື້ຂາຍສິດນຳໃຊ້ທີ່ດິນ ແລະ ທຸລະກຳຕ່າງໆ ກ່ຽວກັບທີ່ດິນແມ່ນໃຫ້ຊຳລະຜ່ານລະບົບທະນາຄານ.

5. ສຸມໃສ່ປັບປຸງ ແລະ ກໍ່ສ້າງບັນດາເສັ້ນທາງຄົມມະນາຄົມທາງບົກ, ທາງນ້ຳ ແລະ ທາງອາກາດ ຕາມແລວທາງເສດຖະກິດຕ່າງໆ, ທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງທ້ອງຖິ່ນ, ລວມທັງການປັບປຸງບັນດາໂຄງລ່າງທີ່ໄດ້ຮັບຜົນກະທົບຈາກໄພພິບັດໃນແຕ່ລະໄລຍະ; ສືບຕໍ່ຊຸກຍູ້ນັກລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ກໍ່ສ້າງເສັ້ນທາງດ່ວນວຽງຈັນ-ຮ່າໂນ້ຍ, ວຽງຈັນ-ບໍ່ເຕັນ; ທາງລົດໄຟທ່າແຂກ ຫາ ຫວຸງອາງ ແລະ ທາງດ່ວນອື່ນໆ. ພ້ອມນັ້ນ, ກໍເອົາໃຈໃສ່ຕິດຕາມ, ຊຸກຍູ້ ໂຄງການຮູບແບບສັນຍາປະສົມປະສານ (OPBRC ແລະ PRTC) ແລະ ອອກແຈ້ງການກ່ຽວກັບການຊຳລະສະສາງໃນການຊື້-ຂາຍພາຫະນະຜ່ານລະບົບທະນາຄານ; ຮີບຮ້ອນຈັດຕັ້ງປະຕິບັດການນຳໃຊ້ທະບຽນລົດສຳລັບລົດໄຟຟ້າ.

6. ຍູ້ແຮງການພັດທະນາພື້ນຖານເສດຖະກິດດີຈີຕອນໃຫ້ແຂງແຮງ, ສາມາດເປັນຂະແໜງທ່າແຮງສະໜັບສະໜູນແກ່ການເຕີບໃຫຍ່ຂອງຂະແໜງເສດຖະກິດປາຍແຫຼມ.

7. ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາຄາດໝາຍຂອງຂະແໜງວັດທະນະທຳ-ສັງຄົມ ທີ່ຍັງມີຄວາມຄືບໜ້າໜ້ອຍ ເປັນຕົ້ນ: ການສົ່ງເສີມການເຂົ້າຮຽນ ແລະ ປັບປຸງຄຸນນະພາບການຮຽນ-ການສອນໃນທຸກຊັ້ນທຸກສາຍ, ສືບ ຕໍ່ແກ້ໄຂບັນຫາການຂາດແຄນຄູ ແລະ ການປະລະການຮຽນ; ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳໃຊ້ລະບົບຫຼັກສູດສາມັນສຶກສາ (6+3+3); ສົ່ງເສີມການເຂົ້າຮຽນອາຊີວະສຶກສາ ແລະ ເຝິກອົບຮົມວິຊາຊີບ.

8. ສືບຕໍ່ນຳໃຊ້ກຳລັງແຮງທົ່ວສັງຄົມ ເຂົ້າໃນການພັດທະນາກຳລັງແຮງງານໃຫ້ມີສີມື ແລະ ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ, ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານທີ່ທັນສະໄໝເພື່ອສະໜອງຂໍ້ມູນໃຫ້ແກ່ການດັດສົມ, ການສະໜອງກຳລັງແຮງງານ ໃຫ້ເຂົ້າເຖິງຕຳແໜ່ງງານ ແລະ ຜູ້ໃຊ້ແຮງງານ.

9. ສືບຕໍ່ສຸມໃສ່ປັບປຸງໂຄງລ່າງດ້ານສາທາລະນະສຸກທັງສູນກາງ ແລະ ທ້ອງຖິ່ນ, ວຽກງານສົ່ງເສີມສຸຂະພາບແມ່ ແລະ ເດັກ, ວຽກງານກອງທຶນປະກັນສັງຄົມ ແລະ ປະກັນສຸຂະພາບ, ວຽກງານສັກວັກຊິນກັນພະຍາດ, ວຽກງານຮັກສາສຸຂະພາບຂັ້ນຕົ້ນ, ການສ້າງຄວາມເຂັ້ມແຂງວຽກງານສະກັດກັ້ນ ແລະ ເຝົ້າລະວັງການແຜ່ລະບາດຂອງພະຍາດຕ່າງໆຕາມລະດູການ; ຄຸ້ມຄອງສະຖານທີ່ບໍລິການປິ່ນປົວທັງພາກລັດ ແລະ ພາກທຸລະກິດ ລວມທັງ ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນການບໍລິການປິ່ນປົວ ແລະ ເສີມຄວາມງາມ.

10. ສຸມໃສ່ປັບປຸງວຽກງານວັດທະນະທຳ, ສົ່ງເສີມແລະ

ອ່ານຕໍ່ໜ້າ 5




## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 4)

ອະນຸລັກວັດທະນະທໍາ ແລະ ຮີດຄອງປະເພນີຂອງຊາດດ້ວຍການພັດທະນາພື້ນຖານໂຄງລ່າງດ້ານວັດທະນະທໍາ ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງວຽກງານໃນປັດຈຸບັນ; ສືບຕໍ່ສຸມໃສ່ປັບປຸງພື້ນຖານໂຄງລ່າງການທ່ອງທ່ຽວເປັນຕົ້ນ: ສະຖານທີ່ທ່ອງທ່ຽວ, ເສັ້ນທາງ ແລະ ສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວອື່ນໆ.

11. ສຸມໃສ່ສ້າງ ແລະ ປັບປຸງກົດໝາຍ ໃຫ້ສໍາເລັດຕາມແຜນສະພາແຫ່ງຊາດຮັບຮອງ, ສ້າງນິຕິກໍາໃຕ້ກົດໝາຍ ໂດຍສະເພາະນິຕິກໍາແນະນໍາການປະຕິບັດກົດໝາຍໃຫ້ທັນສະພາບ; ສຸມໃສ່ປະຕິບັດຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ໄດ້ຫຼາຍ ແລະ ໄວຂຶ້ນ.

12. ສືບຕໍ່ກະກຽມໃຫ້ແກ່ການເຄື່ອນໄຫວວຽກງານຕ່າງປະເທດຂອງການນໍາຂັ້ນສູງໃຫ້ດີ, ເປັນເຈົ້າການ ຈັດຕັ້ງປະຕິບັດຜົນກອງປະຊຸມ, ການຢ້ຽມຢາມຕ່າງປະເທດ ໃຫ້ເປັນຮູບປະທໍາ ແລະ ມີໝາກຜົນ ໂດຍສະເພາະບັນ ດາໂຄງການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ ທີ່ໄດ້ຕົກລົງ ແລະ ລົງນາມຮ່ວມກັນ.

ວາລະທີ 2: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງນິຕິກໍາ ຈໍານວນ 2 ສະບັບ ຄື: 1) ຮ່າງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການປົກຄອງຕາແສງ, 2) ຮ່າງວາລະແຫ່ງຊາດ ວ່າດ້ວຍວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ; ກອງປະຊຸມໄດ້ຊີ້ນໍາໃຫ້ພາກສ່ວນກ່ຽວຂ້ອງ ນໍາເອົາບັນດາຮ່າງນິຕິກໍາດັ່ງກ່າວ ໄປປັບປຸງຕື່ມບາງດ້ານເປັນຕົ້ນ: ການຈັດລຽງເນື້ອໃນ ແລະ ໂຄງສ້າງນິຕິກໍາ, ການອະທິບາຍຄໍາສັບ, ການກໍານົດມາດຕະຖານ-ເງື່ອນໄຂຕ່າງໆ, ການກໍານົດນະໂຍບາຍຕ່າງໆ, ການກໍານົດ ຈໍານວນບຸກຄະລາກອນໃນໂຄງຮ່າງການຈັດຕັ້ງ, ການກໍານົດໜ້າທີ່-ຄວາມຮັບຜິດຊອບ ເພື່ອເຮັດໃຫ້ບັນດານິຕິກໍາດັ່ງກ່າວ ມີເນື້ອໃນຄົບຖ້ວນສົມບູນ, ລະອຽດ-ຈະແຈ້ງ, ຮັດກຸມ, ແທດຕົວຈິງ, ສອດຄ່ອງກັບບັນດາກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ, ທັງສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ. ນອກນັ້ນ, ກອງປະຊຸມຍັງໄດ້ຄົ້ນຄວ້າຮ່າງດໍາລັດວ່າດ້ວຍຕໍາແໜ່ງບໍລິຫານຂອງພະນັກງານ-ລັດຖະກອນ (ສະບັບປັບປຸງ) ໂດຍໄດ້ຊີ້ນໍາໃຫ້ຂະແໜງການກ່ຽວຂ້ອງ ນໍາໄປສືບຕໍ່ຄົ້ນຄວ້າປັບປຸງ, ລະດົມຄວາມຄິດເຫັນຈາກຫຼາຍພາກສ່ວນ ແລ້ວນໍາເຂົ້າພິ ຈາລະນາໃນກອງປະຊຸມລັດຖະບານຄັ້ງຕໍ່ໄປຕື່ມອີກ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງບັນດາທ່ານສະມາຊິກລັດຖະບານ ຈົ່ງນໍາເອົາແຜນວຽກຈຸດສຸມ 6 ເດືອນທ້າຍປີ 2026 ທີ່ກອງປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບຈັດຕັ້ງປະຕິບັດແຕ່ລະຂັ້ນ ແລະ ມີຄາດໝາຍເວລາສໍາເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ ໃຫ້ແຂງແຮງ ແລະ ໄດ້ຮັບຜົນດີ.

**(ກົມປະຊາສໍາພັນ, ຫສນຍ)**

## ສານ...

(ຕໍ່ຈາກໜ້າ 1)

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍນໍາເອົາຄວາມຢ້ຽມຢາມຖາມຂ່າວອັນອົບອຸ່ນ, ຄວາມສາມັກຄີຮັກແພງອັນສະໜິດສະໜົມ ມາຍັງພໍ່ແມ່ປະ ຊາຊົນ, ເພື່ອນມິດສະຫາຍ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕໍາຫຼວດ ແລະ ພະນັກງານ-ລັດຖະກອນ ໃນຂອບເຂດທົ່ວປະເທດ, ຖືໂອກາດນີ້ເພື່ອເປັນການຢືນຢັນຄືນເຖິງມານະຈິດທາງການເມືອງ ແລະ ຄວາມໝາຍໝັ້ນອັນແຮງກ້າ ຂອງວົງຄະນະຍາດສາກົນໃນການຮ່ວມມືກັນປະກອບສ່ວນເຂົ້າໃນຂະບວນການປ້ອງກັນ, ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ທັງຍັງເປັນໂອກາດອັນດີທີ່ພວກເຮົາຈະໄດ້ພ້ອມກັນກວດກາທົບທວນ ແລະ ສັງເກດຕີລາຄາຄືນກ່ຽວກັບຜົນສໍາເລັດ ແລະ ບັນຫາຂໍ້ຄົງຄ້າງ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນປີ 2021-2025 ຜ່ານມາ ເຊິ່ງໄດ້ຮັບໝາກຜົນສໍາເລັດອັນຈົບງາມ.

\- ພີ່ນ້ອງຮ່ວມຊາດ ທີ່ນັບຖື ແລະ ຮັກແພງ!

ດັ່ງທີ່ພວກເຮົາຮັບຮູ້ນໍາກັນດີແລ້ວວ່າ: ຢາເສບຕິດ ເປັນບັນຫາຂອງໂລກ ເຊິ່ງບັນດາປະເທດໃນພາກພື້ນ ແລະ ສາກົນຕ່າງກໍໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ຮ່ວມມືກັນ ໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂບັນຫາດັ່ງກ່າວ. ປັດຈຸບັນ, ຢູ່ປະເທດເຮົາ ກໍພວມຜະເຊີນໜ້າກັບໄພຂົ່ມຂູ່ຈາກບັນຫາຢາເສບຕິດເຊັ່ນກັນ ເຊິ່ງໄດ້ແຜ່ລະບາດເປັນວົງກວ້າງນັບທັງຢູ່ຕົວເມືອງໃຫຍ່ ໄປຮອດເຂດຊົນນະບົດຫ່າງໄກສອກຫຼີກ; ບັນຫາຢາເສບຕິດ ເປັນບັນຫາຕົ້ນ ຕໍທີ່ພາໃຫ້ເກີດບັນດາປາກົດການຫຍໍ້ທໍ້ທາງສັງຄົມ;ການລະບາດຂອງຢາເສບຕິດ ໄດ້ເປັນຫົ່ນແໜງ,ເປັນສາເຫດຂອງການເກີດຄວາມຮຸນແຮງ ກໍ່ອາຊະຍາກໍາ ແລະ ສິ່ງຫຍໍ້ທໍ້ຕ່າງໆ ໃນສັງຄົມ ເຊິ່ງເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ໄດ້ສົ່ງຜົນກະທົບໂດຍກົງຕໍ່ການສ້າງສາພັດທະນາເສດຖະກິດ-ສັງຄົມ, ຕໍ່ຊີວິດ, ຕໍ່ສຸຂະພາບຂອງປະຊາຊົນ, ພົນລະເມືອງລາວ ໂດຍສະເພາະໄດ້ເບື່ອເມົາຊາວໜຸ່ມ, ເຍົາວະຊົນ ທີ່ເປັນຜູ້ສືບທອດພາລະກິດປະຕິວັດ, ເປັນກໍາລັງແຮງງານໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນອະນາຄົດ.

ການລັກລອບຄ້າຂາຍຢາເສບຕິດ, ສິ່ງເສບຕິດ ໄດ້ກາຍເປັນຂະບວນການຂ້າມຊາດ ທີ່ລັດຖະບານແລະປະຊາຊົນລາວ ກໍຄືບັນດາປະຊາຊາດໃນທົ່ວໂລກ ໄດ້ພ້ອມກັນປ້ອງກັນ, ສະກັດກັ້ນ ແລະ ຕໍ່ຕ້ານຢ່າງແຂງແຮງ; ເຖິງວ່າຫຼາຍປະເທດ ໄດ້ເພີ່ມທະວີມາດຕະການທີ່ເດັດຂາດ, ມີຄວາມພະຍາຍາມຮ່ວມກັນ ໃນການຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາດັ່ງກ່າວຢ່າງຕໍ່ເນື່ອງຫຼາຍປານໃດກໍຕາມ ແຕ່ການລັກລອບຜະລິດ, ຄອບຄອງ, ຄ້າຂາຍ, ຈໍາໜ່າຍ, ນໍາໃຊ້ ແລະ ການລໍາລຽງຂົນສົ່ງຢາເສບຕິດຢູ່ໃນທົ່ວໂລກ ກໍຍັງບໍ່ຫຼຸດລົງ ທັງຍັງມີຢາເສບຕິດຊະນິດໃໝ່ເກີດຂຶ້ນ ແລະ ມີທ່າອຽງເພີ່ມຂຶ້ນຢ່າງໜ້າເປັນຫ່ວງ.

ຍ້ອນເຫັນໄດ້ເຖິງພິດໄພຜົນຮ້າຍ ຄວາມເປັນອັນຕະລາຍ ແລະ ຄວາມຈໍາເປັນພາວະວິໄສ ໃນການແກ້ໄຂບັນຫາຢາເສບຕິດ ໃຫ້ມີຄວາມເດັດຂາດ; ໃນຊຸມປີຜ່ານມາ, ພັກ-ລັດຖະບານພວກເຮົາ ໄດ້ນໍາພາ-ຊີ້ນໍາການຈັດຕັ້ງປະຕິບັດວຽກງານວິຊາສະເພາະດັ່ງກ່າວຢ່າງຈິດຈໍ່ຈິງຈັງຕະຫຼອດມາ ໂດຍສະເພາະແມ່ນໄດ້ອີງໃສ່ຜົນສໍາເລັດຂອງການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2025) ລັດຖະບານ ຈຶ່ງໄດ້ກໍານົດການແກ້ໄຂບັນຫາຢາເສບຕິດ ໃຫ້ເປັນແຜນງານແຫ່ງຊາດໃນຕໍ່ໜ້າ ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 171/ສພຊ, ລົງວັນທີ 21 ພະຈິກ 2025. ມາຮອດເວລານີ້ ກໍໄດ້ເນັ້ນໜັກເລັ່ງໃສ່ວຽກງານສ້າງຄວາມຮັບຮູ້ທົ່ວສັງຄົມດ້ວຍການໂຄ ສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍຂອງຢາເສບຕິດ ເປັນວຽກນໍາໜ້າ ຜ່ານພາທະນະສື່ມວນຊົນໃນຮູບແບບຂອງລະຄອນສັ້ນ, ສະປອດ, ບົດເພງ, ຂັບ-ລໍາ, ຕິດປ້າຍຄໍາຂວັນທີ່ມີເນື້ອໃນ ຍົກໃຫ້ເຫັນຜົນຮ້າຍຂອງຢາເສບຕິດ ເຊິ່ງເປັນເຄື່ອງມືສໍາຄັນໃຫ້ແກ່ການເຮັດວຽກງານສ້າງຄວາມຮັບຮູ້ທົ່ວສັງຄົມ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ນັກຮຽນ-ນັກສຶກສາ, ຊາວໜຸ່ມ, ໄວໜຸ່ມ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ຊົມ, ໄດ້ຟັງ, ໄດ້ອ່ານ ຈຶ່ງຕີລາຄາໄດ້ວ່າ ພົນລະເມືອງລາວພວກເຮົາ ແມ່ນມີຄວາມຮັບຮູ້-ເຂົ້າໃຈຢ່າງຖືກຕ້ອງຕໍ່ກັບພິດໄພ, ຜົນຮ້າຍແລະຄວາມເປັນອັນຕະລາຍຂອງຢາເສບຕິດ; ພ້ອມກັນນີ້, ການສ້າງຄວາມເຂັ້ມແຂງທົ່ວປວງຊົນທີ່ເລີ່ມຕົ້ນຈາກສະຖາບັນຄອບຄົວ, ຊຸມຊົນ, ບ້ານ, ພາກລັດ, ເອກະຊົນຕ້ອງໄດ້ຮ່ວມກັນສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ເປັນແຮງຍູ້ທີ່ສໍາຄັນໃນການແກ້ໄຂບັນຫາຢາເສບຕິດ ໂດຍທຸກພາກສ່ວນ, ທຸກໜ່ວຍງານທີ່ກ່ຽວຂ້ອງ ແມ່ນໄດ້ເອົາໃຈໃສ່ໃກ້ຊິດຕິດແທດເຖິງຮາກຖານປະຊາຊົນ ດ້ວຍການນໍາພາ-ຊີ້ນໍາເຮັດຕົວຈິງດ້ວຍຫຼາຍວິທີທີ່ເປັນລະບົບ, ຮັບປະກັນດ້ານການເມືອງ, ກົດໝາຍວິຊາສະເພາະທີ່ກ່ຽວຂ້ອງ. ນອກນັ້ນ, ພວກເຮົາຍັງໄດ້ເອົາໃຈໃສ່ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ບັນດາຄອບຄົວປະຊາຊົນບັນດາເຜົ່າທີ່ອາໄສຢູ່ເຂດພູດອຍຫັນໄປປະກອບອາຊີບໃໝ່ ແລະ ມີອາຊີບທີ່ໝັ້ນຄົງ, ຖືກກົດໝາຍດ້ວຍການປູກພືດທົດແທນພືດທີ່ມີສານເສບຕິດເຊັ່ນ: ການສົ່ງເສີມລ້ຽງສັດ, ປູກພືດເປັນສິນຄ້າ ສາມາດຈໍາໜ່າຍຢູ່ພາຍໃນ ແລະ ຕ່າງປະເທດຢ່າງຕໍ່ເນື່ອງ; ສໍາລັບຜູ້ຖືກເຄາະຮ້າຍຈາກຢາເສບຕິດ ແມ່ນໄດ້ຮັບການບໍາບັດປິ່ນປົວຟື້ນຟູສຸຂະພາບ ແລະ ເຝິກວິຊາຊີບຢູ່ໃນສູນປິ່ນປົວ ແລະ ໂຮງໝໍຊຸມຊົນຂອງລັດຢ່າງມີປະສິດທິພາບ, ເຮັດໃຫ້ຜູ້ຖືກເຄາະຮ້າຍຈາກຢາເສບຕິດໄດ້ກັບຄືນເປັນພົນລະເມືອງດີຂອງສັງຄົມ ແລະ ຄອບຄົວ. ພ້ອມກັນນີ້, ລັດຖະບານຍັງໄດ້ສຸມໃສ່ໃຫ້ທຸກພາກສ່ວນຮ່ວມກັນປະຕິບັດວຽກງານ 3 ສ້າງຕິດພັນກັບການສ້າງຕາແສງ-ບ້ານ ໃຫ້ເປັນຫົວໜ່ວຍພັດທະນາ ໂດຍໄດ້ສ້າງສໍານັກງານ-ອົງການ, ຕາແສງ-ບ້ານ, ສະຖາບັນການສຶກສາ, ໂຮງຮຽນ, ຫົວໜ່ວຍການຜະລິດ, ການບໍລິການ ທັງພາກລັດ ແລະ ເອກະຊົນຢູ່ຕາມທ້ອງຖິ່ນທົ່ວປະເທດປອດຈາກຢາເສບຕິດ ເພີ່ມຂຶ້ນໃນແຕ່ລະປີ. ຄຽງຄູ່ກັນນັ້ນ, ລັດຖະບານຍັງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສໍາຄັນໃນການປະຕິບັດມາດຕະການດ້ານກົດໝາຍຕໍ່ຜູ້ກະທໍາຜິດ; ໃນປີນີ້, ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແມ່ນສາມາດສະກັດກັ້ນ ແລະ ຕ້ານຢາເສບຕິດ ໄດ້ຫຼາຍກໍລະນີ, ພ້ອມທັງໄດ້ເພີ່ມທະວີຄວາມເປັນເຈົ້າການໃນການຕິດຕາມກວດກາ ແລະ ແກ້ໄຂບັນຫາດັ່ງກ່າວຢ່າງຕັ້ງໜ້າ ໂດຍໄດ້ມ້າງຄະດີ, ຍຶດຢາເສບຕິດ, ອາວຸດເສິກ, ຊັບສິນ, ວັດຖຸມີຄ່າ, ສານເຄມີຕັ້ງຕົ້ນຕ່າງໆ ທີ່ພວກກຸ່ມຄົນບໍ່ດີຈະນໍາໄປຜະລິດເປັນຢາເສບຕິດ ໄດ້ເປັນຈໍານວນຫຼວງຫຼາຍ, ສິ່ງສໍາຄັນ ແມ່ນສາມາດຈັບກຸມຜູ້ກະທໍາຜິດມາດໍາເນີນຄະດີຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

\- ພີ່ນ້ອງຮ່ວມຊາດ ທີ່ນັບຖື ແລະ ຮັກແພງທັງຫຼາຍ!

ເນື່ອງໃນວັນສາກົນຕ້ານຢາເສບຕິດ ວັນທີ 26 ມິຖຸນາ 2026 ຄົບຮອບ 39 ປີ ໃນປີນີ້,ຕາງໜ້າໃຫ້ພັກ-ລັດຖະບານແຫ່ງ ສປປລາວ, ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງສຸດໃຈຕໍ່ຄະນະກໍາມະການແກ້ໄຂຢາເສບຕິດລະດັບຊາດ, ເຈົ້າໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງຢູ່ຂັ້ນສູນກາງແລະທ້ອງຖິ່ນຕະຫຼອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດທີ່ໄດ້ໃຫ້ການຮ່ວມມືປະກອບສ່ວນເຂົ້າໃນການແກ້ໄຂບັນຫາຢາເສບຕິດໃນໄລຍະທີ່ຜ່ານມາ. ນະໂອກາດນີ້, ຕາງໜ້າໃຫ້ພັກ ແລະ ລັດຖະບານ ແຫ່ງ ສປປ ລາວ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນ ມາຍັງບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ອົງການ ຈັດຕັ້ງສາກົນ, ອົງການບໍ່ສັງກັດລັດຖະບານ ແລະ ພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ໃຫ້ການຮ່ວມມື, ສະໜັບສະໜູນ, ຊ່ວຍເຫຼືອ ໃຫ້ແກ່ລັດຖະບານ ແລະ ປະຊາຊົນລາວ ໃນການຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນ ຫາຢາເສບຕິດ ໄດ້ຮັບຜົນສໍາເລັດຕະຫຼອດມາ ແລະ ຫວັງວ່າ ຈະສືບຕໍ່ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຕໍ່ໄປອີກໃນອະນາຄົດ.

\- ພີ່ນ້ອງຮ່ວມຊາດ ທີ່ນັບຖື ແລະ ຮັກແພງທັງຫຼາຍ!

ຢາເສບຕິດ ເປັນບັນຫາທີ່ມີຄວາມເປັນອັນຕະລາຍຮ້າຍແຮງ, ເປັນໄພຂົ່ມຂູ່ຕໍ່ຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມໝັ້ນຄົງຂອງບັນດາປະຊາຊາດໃນໂລກ. ດັ່ງນັ້ນ, ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ປະຊາຊົນລາວບັນດາເຜົ່າ, ທຸກເພດ-ໄວ ໃນທົ່ວສັງຄົມ ຕະຫຼອດຮອດບັນດາອົງການຈັດຕັ້ງພັກ-ລັດ, ອົງການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາ, ອົງການພຸດທະສາສະໜາ ແລະ ສະຖາບັນຄອບຄົວ ຕະຫຼອດເຖິງຊາວຕ່າງປະເທດ ທີ່ດໍາລົງຊີວິດ, ທໍາມາຫາກິນ ແລະ ດໍາເນີນທຸລະກິດຢູ່ສປປລາວ ຈົ່ງໄດ້ພ້ອມກັນເປັນເຈົ້າການເຂົ້າຮ່ວມໃນການຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ເພື່ອເຮັດໃຫ້ບັນຫາຢາເສບຕິດຢູ່ໃນສັງຄົມລາວ ໄດ້ຫຼຸດລົງຢ່າງຊັດເຈນ ກ້າວໄປສູ່ສັງຄົມລາວປອດຢາເສບຕິດໃຫ້ໄດ້ໃນທີ່ສຸດ.



ສຸຂະສະບາຍຫາຍໂຣຄ

# ອາຫານທີ່ຄວນຫຼີກລ່ຽງ ເພື່ອຫຼຸດບັນຫາກິ່ນຕົວແຮງ

ຮຽບຮຽງໂດຍ: ດອກຫຍ້າ



ບັນຫາກິ່ນຕົວແຮງ ໃຜບໍ່ເຄີຍເປັນອາດບໍ່ຮູ້ ແຕ່ຮູ້ວ່າຖ້າເມື່ອໃດຫາກພົບຄົນກິ່ນຕົວແຮງ ຕ້ອງກັ້ນຫາຍໃຈ ຫຼືຍ່າງໜີ ແຕ່ສຳລັບເຈົ້າຂອງກິ່ນເອງຄົງຄິດອີກແບບ ເຊິ່ງຜູ້ຂຽນເອງເຊື່ອວ່າ ຄົນທີ່ມີກິ່ນກາຍສ່ວນຫຼາຍຮູ້ຕົວເອງດີ ແລະ ອາດກຳລັງຫາວິທີແກ້ບັນຫາ ເຊິ່ງອາດລອງມາແລ້ວຫລາຍວິທີ ແຕ່ຍັງບໍ່ດີຈັກເທື່ອ ມື້ນີ້, ເຮົາມີວິທີການປັບການກິນມານຳສະເໜີ ເພື່ອຫຼີກລ່ຽງ ແລະ ແກ້ບັນຫາກິ່ນຕົວນີ້ໃຫ້ໝົດໄປ ດັ່ງນີ້:

1. ຫຼີກລ່ຽງອາຫານເຜັດທີ່ເຮັດໃຫ້ເຫື່ອອອກຫຼາຍເຊັ່ນ: ພິກໄທ ແລະ ໝາກເຜັດ;

2. ຫຼີກລ່ຽງທາດແອວກໍຮໍ ແລະ ຄາເຟອີນ ເຮັດໃຫ້ເຫື່ອອອກຫຼາຍຂຶ້ນ;

3. ຫຼີກລ່ຽງອາຫານທີ່ເຮັດໃຫ້ເຫື່ອມີກິ່ນເພີ່ມຂຶ້ນເຊັ່ນ: ສະໝຸນໄພທີ່ມີກິ່ນແຮງ, ກະທຽມ, ຫົວຫອມບົ່ວ, ຫົວສີໃຄ, ຂ່າ; ຜັກໝາກໄມ້ທີ່ມີກິ່ນແຮງເຊັ່ນ: ຖົ່ວລຽນ, ກະຫລ່ຳປີ, ໝາກປີ;

4. ຫຼຸດອາການທີ່ກະຕຸ້ນໃຫ້ຕ່ອມໄຂມັນຜະລິດໄຂມັນອອກມາຫຼາຍ ໂດຍສະເພາະໄຂມັນທີ່ມາຈາກຕ່ອມ Apocrine sweatgland ທີ່ກະຈາຍຢູ່ຕາມຂີ້ແຮ້, ໜີບຂາ ໂດຍຫຼີກລ່ຽງອາຫານມັນ, ທອດ, ຊັອກໂກແລັດ;

5. ຫຼຸດການກິນຊີ້ນສັດ: ມີການວິໄຈທີ່ພິມອອກວາລະສານ Chemical Senses ຂອງມະຫາວິທະຍາໄລ Oxford ພົບວ່າ ຖ້າຫາກກິນຊີ້ນແດງ ຈະເຮັດໃຫ້ກິ່ນຕົວແຮງຂຶ້ນ;

6. ເພີ່ມການກິນຜັກ ແລະ ໝາກໄມ້ໃຫ້ຫຼາຍ: ເພື່ອໃຫ້ໄດ້ໃຍອາຫານ ທີ່ພຽງພໍຕໍ່ການຍ່ອຍ ແລະ ດີທ້ອກລຳໄສ້ແບບທຳມະຊາດ;

7. ຫຼຸດນ້ຳໜັກ: ຫາກນ້ຳໜັກຕົວເອງຫລາຍເກີນໄປ ຄວນລົດທັນທີ ເພາະການຫຼຸດນ້ຳໜັກຊ່ວຍຫຼຸດການຂັບເຫື່ອ ແລະ ສານໄຂມັນຈາກຕ່ອມ Apocrine sweat gland ໄດ້ ແລະ ຊ່ວຍຫຼຸດຄວາມສ່ຽງຂອງການເປັນພະຍາດ ທີ່ອາດເຮັດໃຫ້ເຮົາມີກິ່ນຕົວ

ຫາກເປັນພະຍາດເບົາຫວານ ພະຍາດຕັບ ຫຼື ພະຍາດກ່ຽວກັບໝາກໄຂ່ຫຼັງ ຄວນປິ່ນປົວສຸຂະພາບຕາມແພດສັ່ງ ແລະ ກຳນົດອາຫານແນະນຳຕາມແພດສັ່ງ ເພາະຖ້າຫາກຮ່າງກາຍເຮົາຊຸດໂຊມລົງ ອາດເຮັດໃຫ້ຮ່າງກາຍມີກິ່ນທີ່ບໍ່ປະສົງໄດ້.

ນອກຈາກອາຫານທີ່ກ່າວມານັ້ນແລ້ວ, ຄວນເນັ້ນເລື່ອງການທຳຄວາມສະອາດຮ່າງກາຍ, ເຄື່ອງນຸ່ງຫົ່ມ ແລະ ການພັກຜ່ອນໃຫ້ພຽງພໍ, ຮູ້ຈັກວິທີການຮັບມືກັບຄວາມຄຽດ ສຳລັບການກິນປ້ອງກັນກິ່ນຕົວແຮງແມ່ນ ຄວນກິນອາຫານໃຫ້ຄົບ 5 ໝູ່, ອອກກຳລັງກາຍຢ່າງສະໝ່ຳສະເໝີ ເພື່ອຮັກສານ້ຳໜັກໃຫ້ຢູ່ໃນເກນປົກກະຕິ ເຊິ່ງເປັນປັດໄຈປ້ອງກັນເຊື້ອພະຍາດຕ່າງໆໄດ້

**ຂໍ້ມູນຈາກ:**
**www.laopost.com**

ອາດ ກະວີລາວ

# ໄມ້ແກ່ກາຍຍາມເບັດ ເຫັດແກ່ກາຍຍາມແກງ

**# ໂດຍ: ແສງອຳພັນ**

※ ພຶກສາຊາດພຶດໄມ້
ເບັດໄປຕາມໃຈເຮົາ
ສັນໃດດຽວໂດຍດ້າມ
ກາຍຍາມແກງເພິ່ນເວົ້າ

ລຳແກ່ກາຍຍາມ
ມຸ່ງຫວັງປະສົງໄວ້
ເຫັດບົດຄັນແກ່
ບູຮານນັ້ນກ່າວຈາ

※ ຄົນກໍໂດຍດັ່ງໄມ້
ປັບປ່ຽນແປງນິໄສ
ສັບສົນລຳຄານຫຍຸ້ງ
ທ່ານເອີຍ!
ຄັນບໍ່ເຮັດແນ່ແທ້

ຄັນແກ່ກາຍຍາມ
ຍາກໃຈເຫຼືອລົ້ນ
ປັບປຸງຕົນຕອນແກ່

ມິມີໄດ້ຮັບຜົນ ດອກນາ!

※ ຫາກວ່າຮູ້ຮີບຮ້ອນ
ປັບປຸງຕອນເຍົາໄວ
ຄາວເມື່ອເຍົາຍັງນ້ອຍ
ຢ້ານເປັນຄືເພິ່ນເວົ້າ

ວອນຮ່ຳຄຳສອນ
ປ່ຽນນິໄສໄວຟ້າວ
ແນວບໍ່ດີຄວນປ່ຽນ
ເໝືອນໄມ້ແກ່ເກີນ

※ ບູຮານເພິ່ນວ່າໄວ້
ຄຳນວນຈິດໃຈຕົນ
ປະປ່ອຍໄປເລີງເລື້ອຍ
ຄືເຫັດບົດກະດ້າງ

ຄົນໃຫມ່ຄວນຈຳ
ຢ່າເປັນຄົນຄືໄມ້
ດົນຫລາຍເລີຍແກ່
ແກງໄດ້ກໍ່ບໍ່ນົວ ດອກນາ!

※ ດີແທ້ຕອນໜຸ່ມນ້ອຍ
ສຶກສາທຳຄວາມດີ
ປັບປຸງແປງນິໄສໃຫ້
ຄົນຈຶ່ງຍໍຍົກຍ້ອງ

ຄວນຮ່ຳຮຽນວິຊາ
ໃສ່ຕົນປະດັບເອ້
ສັງຄົມຮັກຮໍ່
ດີແທ້ຊື່ນຊົມ ທ່ານເອີຍ!



## ສັງຄົມ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທັຽນ

※ ຕາມຂ່າວໃຫ້ຮູ້ວ່າ: ເມື່ອອາທິດຜ່ານມາ ຊ້າງນ້ອຍຈຳນວນ 2 ໂຕ ຊື່ວ່າ: **“ນ້ອງນ້ຳຕານ ແລະ ນ້ອງໄພລິນ”** ໄດ້ເດີນທາງຮອດປະເທດລັດເຊຍແລ້ວ ເຊິ່ງເປັນຂອງຂວັນຈາກປະທານປະເທດຂອງລາວ ມອບໃຫ້ແກ່ປະເທດລັດເຊຍ ເປັນທີ່ງາມເອກອ້າງ ເຊິ່ງຊ່າແດນລາວ ຊາວປະຊາຍິນດີ ຊື່ນຊົມຍ່ຍ້ອງ ນ່າສອງຊ້າງນ້ອຍ ຮ່ວມມືປະສານເຊື່ອມ ເພື່ອພັດທະນາສົ່ງເຂດບ້ານ ຈະເລີນກ້າວລື່ນຫຼັງ **ຊອບແລ້ວ!**

※ ຕາມແຈ້ງການເຕືອນຂອງກົມອຸຕຸນິຍົມ ແລະ ອຸທົກກະສາດ ໃນກາງເດືອນພຶດສະພາທີ່ຜ່ານມາ ວ່າ: ໃນປີນີ້ ຈະມີປາກົດການ **“ແອວນີໂຍ (El Nino)”** ທີ່ເປັນປາກົດການທາງທຳມະຊາດ ຈະເກີດທຸກໆ 2-7 ປີ ເຊິ່ງຈະເຮັດໃຫ້ລະດູຝົນມາຊ້າ ແລະ ມີປະລິມານນ້ຳຝົນໜ້ອຍກວ່າປົກກະຕິ ອາກາດແປປ່ຽນປັ້ນ ຝົນບໍ່ຫຼັ່ງລິນໄຫຼ ສາຍທາລາຫຼາຍສາຂາ ຂາດເຂີນບົກແຫ້ງ ແຕ່ວ່າທົບທາງນັ້ນ ເປັນວັງເວີນບໍ່ ເດີນໄປ-ມາກໍ່ຍາກຫຍຸ້ງ ສົ່ງມາປັ້ນປ່ຽນກັນ**ແດ່ບໍ່!** ຫຼືວ່າວິບທາທ່ານທ້າວ ເຄືອງໂກດໂກທາ ອາລົມເສຍທຸບທອາຍ ເກີດຊົນລະອົນຮ້າຍ ເຮັດໃຫ້ທາລາທັ້ງເມືອງ ຄົນບໍ່ເຖິງທໍ່ ຫຼືວ່າທຳມະຊາດຮ້າຍ ຄົນຄົ້ນກົ່ນທ່າລາຍຜ່ານມາ **ນັ້ນບໍ່!**

## ຊອບຍິ້ມ

# ພົ້ງລື່ງ

### ເລື່ອງ: ຢາກເປັນປະຊາຊົນ

ສີ່ສ່ຽວກຳລັງສົນທະນາເລື່ອງອາຊີບໃນຝັນ, ທ້າວແດງເປີດສາກເລົ່າກ່ອນໝູ່

**ທ້າວແດງ:** ກູຢາກເປັນຕຳຫຼວດເພາະຢາກປົກປ້ອງປະຊາຊົນ

**ທ້າວຂຽວ:** ກູຢາກເປັນຜູ້ແທນ ຈະໄດ້ປະກອບສ່ວນສ້າງກົດໝາຍໃຫ້ແກ່ປະຊາຊົນ

**ທ້າວຂາວ:** ກູຢາກເປັນໝໍ ຈະໄດ້ປິ່ນປົວປະຊາຊົນ

ທ້າວກ່ຳ ມິດງຽບຢູ່, ໝູ່ສົງໄສເລີຍຖາມວ່າ ມຶງຢາກເປັນຫຍັງ

**ຫຍັງທ້າວກ່ຳ:** ກູຢາກເປັນປະຊາຊົນ???

## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

“ໃຫ້ທຸກແກ່ທ່ານ ທຸກນັ້ນເຖິງໂຕ”

ລັດຖະສະພາຕ່າງປະເທດ

# Gatchalian ເປັນປະທານສະພາສູງຟີລິບປິນຜູ້ໃໝ່

(Xinhua) - ວັນພຸດທີ 17 ມິຖຸນານີ້, ສະມາຊິກສະພາສູງ 13 ຄົນ ໄດ້ເຂົ້າຮ່ວມກອງປະຊຸມພິເສດຂອງສະພາສູງແລະລົງມະຕິແຕ່ງຕັ້ງ ເຊີວິນ ກັດຊາລຽນ(Sherwin Gatchalian) ເປັນປະທານສະພາສູງຜູ້ໃໝ່ຂອງສະພາທີ່ມີສະມາຊິກ 24 ຄົນ, ເຊິ່ງເປັນຈຳນວນຂັ້ນຕ່ຳທີ່ຕ້ອງການເພື່ອເລືອກຕັ້ງປະທານສະພາສູງຜູ້ໃໝ່; ກັດຊາລຽນເຄີຍດຳລົງຕຳແໜ່ງເປັນເຈົ້ານະຄອນວາເລນຊູເອລາ (Valenzuela) ໃນນະຄອນຫຼວງມະນິລາ ແລະ ເປັນສະມາຊິກສະພາຜູ້ແທນປະຊາຊົນ(ສະພາຕ່ຳ) ລວມທັງຕຳແໜ່ງອື່ນໆມາກ່ອນ.

ວັນທີ 3 ມິຖຸນາ, ສະມາຊິກສະພາສູງ 12 ຄົນ ໄດ້ເລືອກຕັ້ງກັດຊາລຽນເປັນປະທານສະພາສູງຊົ່ວຄາວ ແລະ ກ່າວວ່າ ອາລັນ ປີເຕີ ຄາເຢຕາໂນ (Alan Peter Cayetano) ເຊິ່ງເຂົ້າຮັບຕຳແໜ່ງປະທານສະພາສູງເມື່ອວັນທີ 11 ພຶດສະພາ ໄດ້ລາອອກຈາກຕຳແໜ່ງ; ໃນວັນດຽວກັນນັ້ນ, ຄາເຢຕາໂນ ກ່າວວ່າ ເຂົາຍັງຢູ່ໃນຕຳແໜ່ງ ແລະ ຈຳເປັນຕ້ອງມີສະມາຊິກສະພາສູງ 13 ຄົນ ເພື່ອດຳເນີນການເລືອກຕັ້ງ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ສະພາສູງ.

ປັດຈຸບັນ, ສະພາສູງມີສະມາຊິກພຽງ 22 ຄົນ; ສະມາຊິກສະພາສູງ 1 ຄົນ ໄດ້ເຂົ້າມອບຕົວຕໍ່ຕຳຫຼວດໃນຕົ້ນເດືອນນີ້ ແລະ ສານຕ້ານການສໍ້ລາດບັງຫຼວງ ໄດ້ສັ່ງພັກວຽກເຂົາເປັນເວລາ 90 ວັນ ເມື່ອວັນທີ 16 ມິຖຸນາ ຈາກຄະດີສໍ້ລາດບັງຫຼວງຂອງເຂົາ, ສະມາຊິກສະພາສູງອີກຄົນເປັນຜູ້ຕ້ອງສົງໄສທີ່ສານອາຍາສາກົນຕ້ອງການຕົວ ໂດຍບໍ່ຊາບທີ່ຢູ່ຂອງເຂົາ.




# Sri Lanka ຈະນຳປະມວນກົດໝາຍແຮງງານສະບັບໃໝ່ມາໃຊ້ ພາຍໃນຈິບປີ 2026



(Xinhua) - ສີລັງກາມີແຜນຈະນຳປະມວນກົດໝາຍແຮງງານສະບັບໃໝ່ມາໃຊ້ ພາຍໃນຈົບປີ 2026 ເຊິ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມເພື່ອປັບປຸງກົດໝາຍແຮງງານໃຫ້ທັນສະໄໝ, ປັບປຸງສາຍພົວພັນແຮງງານ ແລະ ຊຸກຍູ້ການເຕີບໂຕທີ່ຂັບເຄື່ອນດ້ວຍການສົ່ງອອກ, ອານິລ ຈາຢັນທາ ເຟີນັນໂດ (Anil Jayantha Fernando) ລັດຖະມົນຕີກະຊວງແຮງງານ ກ່າວໃນວັນອັງຄານທີ 16 ມິຖຸນານີ້; ເຟີນັນໂດ ກ່າວໃນງານເປີດຕົວແຜນພັດທະນາການສົ່ງອອກແຫ່ງຊາດປີ 2026-2030 ວ່າ ຄະນະກຳມະການຜູ້ຊ່ຽວຊານທີ່ແຕ່ງຕັ້ງໂດຍຄະນະລັດຖະມົນຕີ ກຳລັງລວບລວມແລະປັບປຸງກົດໝາຍແຮງງານທີ່ມີຢູ່ໃຫ້ເປັນຂອບກົດໝາຍດຽວ.

ຮ່າງປະມວນກົດໝາຍຄາດວ່າຈະເປີດໃຫ້ປະຊາຊົນແລະຜູ້ຊ່ຽວຊານກວດຄືນກ່ອນທີ່ຈະສະຫຼຸບຂັ້ນສຸດທ້າຍ.

ຂອບກົດໝາຍທີ່ສະເໜີນີ້ ມີຈຸດປະສົງເພື່ອປ່ຽນແທນກົດໝາຍທີ່ລ້າສະໄໝແລະຫຼຸດຜ່ອນຄວາມເຄັ່ງຕຶງທາງອຸດສາຫະກຳທີ່ມີມາດົນນານ ໂດຍການສົ່ງເສີມສະພາບແວດລ້ອມບ່ອນເຮັດວຽກທີ່ໝັ້ນຄົງ ແລະ ເນັ້ນໃສ່ຜະລິດຕະພາບຫຼາຍຂຶ້ນ.

ເຟີນັນໂດກ່າວວ່າການປະຕິຮູບຈະສອດຄ່ອງກັບມາດຕະຖານສາກົນ ແລະ ຈະສະໜັບສະໜູນຄວາມພະຍາຍາມຂອງສີລັງກາ ໃນການປັບປຸງປະສິດທິພາບແຮງງານ, ເສີມສ້າງທຶນມະນຸດແລະເພີ່ມຄວາມສາມາດໃນການແຂ່ງຂັນໃນຕະຫຼາດໂລກ, ລັດຖະບານຍັງມີແຜນທີ່ຈະສະໜັບສະໜູນການປະຕິຮູບແຮງງານດ້ວຍມາດຕະການດ້ານການສຶກສາແລະການພັດທະນາແຮງງານທີ່ເຊື່ອມໂຍງກັບເປົ້າໝາຍການສົ່ງອອກຂອງປະເທດ; ເຂົາກ່າວວ່າ ການຫັນເປັນດິຈິຕອນຈະຊ່ວຍຫຼຸດຕົ້ນທຶນການຜະລິດ ແລະ ເພີ່ມປະສິດທິພາບ.

ຄາດວ່າ ປະມວນກົດໝາຍແຮງງານຈະເປັນເສົາຄ້ຳສຳຄັນຂອງຍຸດທະສາດ 5 ປີ ຂອງຄະນະກຳມະການພັດທະນາການສົ່ງອອກ ເຊິ່ງມີຈຸດປະສົງເພື່ອເຊື່ອມໂຍງສີລັງກາເຂົ້າກັບລະບົບຕ່ອງໂສ້ການສະໜອງທົ່ວໂລກໃຫ້ດີຍິ່ງຂຶ້ນ.

# Sweden ຜ່ານກົດໝາຍ "ຄວາມປະພຶດດີ" ເພື່ອຂັບໄລ່ຄົນເຂົ້າເມືອງທີ່ປະພຶດຕົວບໍ່ເໝາະສົມ



(REUTERS) - ວັນທີ 15 ມິຖຸນານີ້, ລັດຖະສະພາສະວີເດັນ ຫຼື ຊູແອດ ໄດ້ຜ່ານກົດໝາຍທີ່ອະນຸຍາດໃຫ້ເຈົ້າໜ້າທີ່ຍົກເລີກໃບອະນຸຍາດພັກອາໄສຂອງຄົນເຂົ້າເມືອງ ໂດຍອີງໃສ່ພຶດຕິກຳທີ່ບໍ່ດີ ເຊັ່ນ: ການມີໜີ້ສິນຄ້າງຊຳລະ, ການເຮັດວຽກໂດຍບໍ່ແຈ້ງ ຫຼື ການເຊື່ອມໂຍງກັບອົງການຫົວຮຸນແຮງ; ກົດໝາຍສະບັບນີ້ກວມເອົາທັງໃບອະນຸຍາດທີ່ ຢູ່ລະຫວ່າງການພິຈາລະນາ ແລະ ໃບອະນຸຍາດທີ່ໄດ້ຮັບການອະນຸມັດແລ້ວ, ເຊິ່ງເປັນສ່ວນໜຶ່ງຂອງການເຂັ້ມງວດລະບຽບການເຂົ້າເມືອງທີ່ກວ້າງຂວາງຂຶ້ນ ໂດຍລັດຖະບານຝ່າຍຂວາແລະພັກສະໜັບສະໜູນ ຄືພັກປະຊາທິປະໄຕສະວີເດັນ(Sweden Democrats) ເຊິ່ງເປັນພັກຊາດນິຍົມ ກ່ອນການເລືອກຕັ້ງລັດຖະສະພາໃນເດືອນກັນຍານີ້.

ກົດໝາຍດັ່ງກ່າວ ຖືກວິພາກວິຈານຈາກຝ່າຍຄ້ານແລະກຸ່ມສິດທິມະນຸດ ວ່າເປັນການກະທຳຕາມອຳເພີໃຈ, ເນື່ອງຈາກເປັນການຕັດສິນໃຈຈາກພຶດຕິກຳທີ່ຍັງບໍ່ຖືວ່າເປັນອາຊະຍາກຳ; ກຸ່ມຜູ້ປົກປ້ອງສິດທິພົນລະເຮືອນໃນນະຄອນ ຫຼວງສະຕອກໂຮມ ໄດ້ກ່າວໃນຖະແຫຼງການວ່າ ກົດໝາຍວ່າດ້ວຍພຶດຕິກຳທີ່ດີ ເຮັດໃຫ້ຜູ້ຄົນບໍ່ແນ່ໃຈວ່າການກະທຳ ຫຼື ການສະແດງອອກໃດ ທີ່ຈະຖືກນຳມາໃຊ້ເປັນຫຼັກຖານຕໍ່ພວກເຂົາ, ເຊິ່ງອາດທຳລາຍຫຼັກນິຕິທຳ ແລະ ຫຼັກການຄວາມສະເໝີພາບທາງກົດໝາຍ.

ເຖິງກົດໝາຍຈະບໍ່ໄດ້ລະບຸປະເພດຂອງພຶດຕິກຳທີ່ຖືວ່າບໍ່ເໝາະສົມ, ແຕ່ລັດຖະບານໄດ້ກ່າວເຖິງໜີ້ສິນຄ້າງຊຳລະ, ການບໍ່ຈ່າຍພາສີ, ແລະ ການກະທຳຜິດທາງອາຍາ ແລະ ການເຊື່ອມໂຍງກັບອົງການຫົວຮຸນແຮງ.

ອົງການຍ້າຍຖິ່ນຖານມີໜ້າທີ່ຮັບຜິດຊອບໃນການກວດຄືນໃບອະນຸຍາດ ແລະ ສາມາດຍື່ນອຸທອນຄຳຕັດສິນຕໍ່ສານຍ້າຍຖິ່ນຖານໄດ້.

# ລັດຖະສະພາເອີຣົບ ອະນຸມັດຮ່າງກົດໝາຍຂໍ້ຕົກລົງການຄ້າ EU-US




(Xinhua) - ວັນອັງຄານທີ 16 ມິຖຸນາ, ລັດຖະສະພາເອີຣົບ (European Parliament) ໄດ້ອະນຸມັດຮ່າງກົດໝາຍເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງການຄ້າ ສະຫະພາບເອີຣົບ-ສະຫະລັດອາເມລິກາ (EU-US) ເຊິ່ງເປັນຂັ້ນຕອນສຸດທ້າຍໃນລະດັບລັດຖະສະພາກ່ອນທີ່ຂໍ້ຕົກລົງຈະມີຜົນບັງຄັບໃຊ້ຢ່າງເປັນທາງການ.

ຮ່າງກົດໝາຍນີ້ ຈະຍົກເລີກພາສີສ່ວນໃຫຍ່ສຳລັບສິນຄ້າອຸດສາຫະກຳ ແລະ ກະສິກຳຈາກສະຫະລັດ ແລະ ເພີ່ມກົນໄກການປົກປ້ອງ ໂດຍລະບຸວ່າຂໍ້ຕົກລົງຈະຍັງມີຜົນບັງຄັບໃຊ້ຈົນຮອດທ້າຍປີ 2029 ເວັ້ນແຕ່ຈະມີການຕໍ່ອາຍຸ; ນອກຈາກນີ້, ຍັງອະນຸຍາດໃຫ້ EU ໂຈະຂໍ້ຕົກລົງໄດ້ ຫາກວໍຊິງຕັນບໍ່ສາມາດປະຕິບັດພັນທະຂອງຕົນຫຼືໃຊ້ມາດຕະການທີ່ເປັນອຸປະສັກຕໍ່ການຄ້າ ແລະ ການລົງທຶນ.

ຂັ້ນຕອນຕໍ່ໄປແມ່ນການສະເໜີຮ່າງກົດໝາຍຕໍ່ສະພາສະຫະພາບເອີຣົບ (Council of the EU) ເພື່ອຂໍອະນຸມັດ; ເມື່ອໄດ້ຮັບການອະນຸມັດຢ່າງເປັນທາງການ, ຈະມີຜົນບັງຄັບໃຊ້ໃນວັນຖັດຈາກການເຜີຍແຜ່ໃນວາລະສານທາງການຂອງ EU.

# ສະພາແຫ່ງຊາດ ສ.ເກົາຫຼີ ເລີ່ມການສືບສວນການຂາດແຄນບັດເລືອກຕັ້ງ



(REUTERS) - ວັນທີ 18 ມິຖຸນານີ້, ສະພາແຫ່ງຊາດ ສ.ເກົາຫຼີ ເລີ່ມການສືບສວນເປັນເວລາ 45 ວັນ ກ່ຽວກັບຄະນະກຳມະການເລືອກຕັ້ງແຫ່ງຊາດ(NEC)ຫຼັງຈາກເກີດບັນຫາຂາດແຄນບັດເລືອກຕັ້ງທີ່ສົ່ງຜົນກະທົບຕໍ່ການລົງຄະແນນສຽງໃນການເລືອກຕັ້ງທ້ອງຖິ່ນເມື່ອວັນທີ 3 ມິຖຸນາຜ່ານມາ, ໂດຍໄດ້ອະນຸມັດແຜນການດັ່ງກ່າວໃນລະຫວ່າງກອງປະຊຸມໃຫຍ່.

ກຳມາທິການພິເສດຂອງສະພາແຫ່ງຊາດ ຈະກວດສອບ NEC ແລະ ຄະນະກຳມະການເລືອກຕັ້ງທ້ອງຖິ່ນ ໃນສິ່ງທີ່ສະມາຊິກສະພາແຫ່ງຊາດ (ສສຊ) ອະທິບາຍວ່າເປັນການລະເມີດສິດໃນການອອກສຽງຂອງພົນລະເມືອງ ແລະ ຄວາມຈຳເປັນໃນການປະຕິຮູບການຈັດການເລືອກຕັ້ງ; ຄະນະກຳມະການສືບສວນປະກອບດ້ວຍ ສສຊ ຈາກພັກປະຊາທິປະໄຕ ເຊິ່ງເປັນພັກລັດຖະບານ, ພັກພະລັງປະຊາຊົນ (PPP)ພັກຝ່າຍຄ້ານຕົ້ນຕໍແລະຈາກພັກຂະໜາດນ້ອຍ ໂດຍມີ ຢຸນ ຊັງ-ຮຸນ (Yoon Sang-hyun) ສສຊ ຈາກພັກ PPP ເປັນປະທານ.

ໂຊ ຈອງ-ຊິກ (Cho Jeong-sik) ປະທານສະພາແຫ່ງຊາດ ກ່າວວ່າ "ການສືບສວນຄວາມຈິງບໍ່ແມ່ນຈຸດຈົບ, ແຕ່ເປັນການເລີ່ມຕົ້ນ" ໂດຍກ່າວຕື່ມວ່າ "ການສືບສວນຂອງສະພາແຫ່ງຊາດຄວນລະບຸສາເຫດ ແລະ ນຳໄປສູ່ມາດຕະການປະຕິຮູບການຈັດການເລືອກຕັ້ງທີ່ປະຊາຊົນສາມາດໄວ້ວາງໃຈໄດ້.

ວັນພຸດທີ 17 ມິຖຸນາ, ຄັງ ດົງ-ວານ (Kang Dong-wan) ຮັກສາການເລຂາທິການ NECກ່າວກັບຕົວແທນນັກສຶກສາຈາກມະຫາວິທະຍາໄລທີ່ອອກມາປະທ້ວງວ່າຄະນະກຳມະການຮູ້ສຶກເສຍໃຈຢ່າງເລິກເຊິ່ງຕໍ່ການກະກຽມທີ່ບໍ່ພຽງພໍ ແລະ ຈະໃຫ້ການຮ່ວມມືກັບການສືບສວນຂອງສະພາແຫ່ງຊາດ, ການສືບສວນຮ່ວມກັນລະຫວ່າງຕຳຫຼວດ-ໄອຍະການ ແລະ ການກວດສອບພາຍໃນອົງການເອງ.

ເຈົ້າໜ້າທີ່ NEC ກ່າວເມື່ອວັນທີ17ມິຖຸນາວ່າການຂາດແຄນບັດເລືອກຕັ້ງໄດ້ເກີດຂຶ້ນຢູ່ 91 ໜ່ວຍເລືອກຕັ້ງທົ່ວປະເທດ, ໂດຍການລົງຄະແນນສຽງຖືກໂຈະຊົ່ວຄາວຢູ່ 26 ໜ່ວຍ ໃນລະຫວ່າງການເລືອກຕັ້ງທ້ອງຖິ່ນ.




*#ບ່າວກະບື*

**ລີລີ:** "ເຮົາຕ້ອງການແຕ່ງດອງກັບຜູ້ຊາຍທີ່ສາມາດອັດປາກມັນຮູບ ເມື່ອເຮົາຕ້ອງການໃຫ້ເຂົາມິດ ແລະ ເວົ້າ ເມື່ອເຮົາຕ້ອງການໃຫ້ເຂົາເວົ້າ"

**ມາລີ:** "ໂຫ ຄວາມຄິດໂຕຄືມາພິດສະຫວາດເອົາແທ້ໆ"

**ລີລີ:** "ຫວະ?"

**ມາລີ:** "ແຕ່ວ່າໃນກໍລະນີນີ້ ເປັນຫຍັງໂຕບໍ່ຊື້ໂທລະພາບມາໄວ້ຈັກໜ່ວຍຈັກໃດ?"

***#BAOKBU***

**LYLY:** "I want to marry the man who can shut his mouth when I want him to and start talking when I want him to"

**MALY:** "What a romantic idea?"

**LYLY:** "Really?"

**MALY:** "But in that case why don't you buy yourself a television set"

## ໜ່ວຍພັກ...

(ຕໍ່ຈາກໜ້າ 1)



ຕົ້ນແມ່ນວຽກງານການເມືອງ-ແນວຄິດ, ການກໍ່ສ້າງ ແລະ ຂະຫຍາຍພັກ, ວຽກງານອົງການຈັດຕັ້ງມະຫາຊົນ, ວຽກງານກວດກາ ແລະ ການນຳພາປະຕິບັດໜ້າທີ່ວິຊາສະເພາະ ໂດຍສະເພາະແມ່ນການເຄື່ອນໄຫວຕ່າງປະເທດຂອງສະພາແຫ່ງຊາດ ທີ່ມີຜົນສຳເລັດເປັນກ້າວໆມາ ພ້ອມທັງຊີ້ໃຫ້ເຫັນບາງດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ.

ສຳລັບທິດທາງແຜນການ 5 ປີຕໍ່ໜ້າ (2026-2030), ໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ ຈະສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານ ຍົກສູງຄຸນທາດການເມືອງ ໂດຍການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ແລະ ບັນດາເອກະສານສຳຄັນຂອງພັກ-ລັດ; ປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກ ບົນຫຼັກການລວມສູນປະຊາທິປະໄຕ; ເອົາໃຈໃສ່ກໍ່ສ້າງໜ່ວຍພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ; ຊີ້ນຳອົງການຈັດຕັ້ງມະຫາຊົນ ໃຫ້ເຄື່ອນໄຫວຕາມພາລະບົດບາດແລະປັບປຸງກົງໄກການຈັດຕັ້ງ, ສັບຊ້ອນບຸກຄະລາກອນໃຫ້ແທດເໝາະກັບວິຊາສະເພາະພ້ອມທັງສືບຕໍ່ນຳພາ-ຊີ້ນຳວຽກງານວິຊາສະເພາະ ເພື່ອຜັນຂະຫຍາຍບັນດາມະຕິກອງປະຊຸມອົງຄະນະພັກສະພາແຫ່ງຊາດ ຄັ້ງທີ V, ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ IV ຂອງໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ, ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ແລະ ແຜນການເຄື່ອນໄຫວ 5 ປີຂອງສະພາແຫ່ງຊາດ(2026-2030) ທີ່ປະກອບມີ 5 ແຜນງານ ແລະ 26 ໂຄງການ ໃຫ້ປະສົບຜົນສຳເລັດຢ່າງຈົບງາມ.




ໃນກອງປະຊຸມ, ຜູ້ແທນຍັງໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ ສະໄໝທີ IV ເຊິ່ງມີຜູ້ອອກຮັບສະໝັກ 7 ສະຫາຍ, ຍິງ 1 ສະຫາຍ ແລະ ເລືອກໄດ້ຄະນະໜ່ວຍພັກຊຸດໃໝ່ ຈຳນວນ 5 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກ ໄດ້ເປັນເອກະສັນເລືອກເອົາສະຫາຍ ໂພໄຊ ໄຊຄຳພິທູນ ເປັນເລຂາ, ສະຫາຍ ເພັດລາ ທັນທະວົງສາ ເປັນຮອງເລຂາ, ສະຫາຍ ໂພສີ ເຕັມເມລາດ ເປັນປະທານກວດກາ, ສະຫາຍ ໄຊປັນຍາ ພົມວິຫານ ແລະ ສະຫາຍ ນາງ ນິດແກ້ວ ຄຳມີ ເປັນກຳມະການໜ່ວຍພັກຮາກຖານ. ພ້ອມກັນນັ້ນ, ຍັງໄດ້ເລືອກຕັ້ງເອົາຜູ້ແທນສົມບູນ 13 ສະຫາຍ ແລະ ຜູ້ແທນສຳຮອງ 2 ສະຫາຍ ເພື່ອໄປເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດເຊິ່ງຈະເປີດຂຶ້ນໃນຕໍ່ໜ້າ.

ໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້, ສະຫາຍ ນາງ ສູນທອນ ໄຊຍະຈັກ ໄດ້ໃຫ້ກຽດໂອ້ລົມ ໂດຍສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດທີ່ໜ່ວຍພັກຍາດມາໄດ້ໃນໄລຍະ 5 ປີຜ່ານມາ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນຜົນສຳເລັດລວມຂອງສະພາແຫ່ງຊາດ. ພ້ອມນັ້ນ, ສະຫາຍຍັງໄດ້ເນັ້ນໜັກໃຫ້ຄະນະໜ່ວຍພັກຊຸດໃໝ່, ສະມາຊິກພັກແລະພະນັກງານທຸກສະຫາຍ ຈົ່ງເພີ່ມທະວີຄວາມຮັບຜິດຊອບການເມືອງໃຫ້ສູງຂຶ້ນ, ເຊີດຊູຄວາມເປັນແບບຢ່າງຮອບດ້ານ, ຫັນປ່ຽນການເຄື່ອນໄຫວວຽກງານຕ່າງປະເທດຂອງສະພາແຫ່ງຊາດ ໃຫ້ມີຄຸນນະພາບໃໝ່ຢ່າງຕັ້ງໜ້າ ແລະ ມີຜົນສຳເລັດໃຫຍ່ຫຼວງກວ່າເກົ່າ ພ້ອມທັງສືບຕໍ່ສ້າງໜ່ວຍພັກໃຫ້ເປັນໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ໄດ້ຢ່າງແທ້ຈິງ.

ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ IV ຂອງໜ່ວຍພັກຮາກຖານກຳມາທິການການຕ່າງປະເທດ ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ແລະ ຮັບຮອງເອົາມະຕິກອງປະຊຸມໃຫຍ່ຂອງຕົນຢ່າງເປັນເອກະສັນ.

**ຄະນະບັນນາທິການ**
ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ